ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

08-15 ທັນວາ 2023
ປີທີ 12
ສະບັບທີ 949
ລາຍສັປະດາ

## “ເພີ່ມທະວີບົດບາດຂອງລັດຖະສະພາ ໃນການສົ່ງເສີມການຮ່ວມມືຮອບດ້ານລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ”




(ສພຊ) ພາຍຫຼັງດຳເນີນມາເປັນເວລາ 2 ວັນເຕັມ ໃນວັນທີ 6 ທັນວາ 2023 ກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ພາຍໃຕ້ຫົວຂໍ້:ເພີ່ມທະວີບົດບາດຂອງລັດຖະສະພາໃນການສົ່ງເສີມການຮ່ວມມືຮອບດ້ານລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ ໄດ້ປິດລົງດ້ວຍຜົນສຳເລັດອັນສະຫງ່າງາມ ທີ່ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ສົມເດັດ ມະຫາ ຣັດສະເພຍທິກາ ທິພາໄດ ຄຸນ ສຸດາຣີ ປະທານສະພາແຫ່ງຊາດ ແຫ່ງ ລາຊະອານາຈັກກຳປູເຈຍ, ທ່ານ ເວືອງ ດິງ ເຫວ້ ປະທານສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ 3 ປະເທດເຂົ້າຮ່ວມ.

ໂອກາດດັ່ງກ່າວ, ປະທານສະພາແຫ່ງຊາດ3ປະເທດ ຜັດປ່ຽນກັນລົງນາມ ເຊັນຖະແຫຼງການຮ່ວມຂອງກອງປະຊຸມ ແລະ ຮັບຮອງບັນທຶກວິດີໂອຈາກເຈົ້າພາບກອງປະຊຸມໃນຄັ້ງຕໍ່ໄປ. ຈາກນັ້ນ, ທ່ານ ເວືອງ ດິງ ເຫວ້ ກໍໄດ້ມີຄຳເຫັນກ່າວຮັບ ໃນໂອກາດທີ່ ສສ. ຫວຽດນາມ ຈະເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 2 ທີ່

ອ່ານຕໍ່ໜ້າ 3

## ຂ່າວໜ້າໃນ



ສຳພາດປະທານຄະນະ...

(ໜ້າ 6)



ສສຊ ສະເໜີໃຫ້ລັດຖະບານ...

(ໜ້າ 7)




ມາດຕະການປົກປ້ອງຂໍ້ມູນລັບ...

(ໜ້າ 8)

## ຖະແຫຼງຜົນສຳເລັດຂອງການເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1

ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ໄດ້ຖະແຫຼງຂ່າວກ່ຽວກັບຜົນສຳເລັດຂອງການເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ທີ່ນະຄອນຫຼວງວຽງຈັນໃນວັນທີ 6 ທັນວາ 2023 ວ່າ: ກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ ຄັ້ງທີ 1 ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 5 ທັນວາ 2023




ແລະ ດຳເນີນໄປເປັນເວລາ 2 ວັນ ພາຍໃຕ້ຫົວຂໍ້: ເພີ່ມທະວີບົດບາດຂອງລັດຖະສະພາໃນການສົ່ງເສີມການຮ່ວມມືຮອບດ້ານ ລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ.ກອງປະຊຸມໄດ້ຮັບກຽດຢ່າງສູງຈາກທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມ ແລະ ກ່າວສູນທອນພົດຕໍ່ພິທີເປີດກອງປະຊຸມ ແລະ ມີບັນດາຜູ້ແທນຂັ້ນສູງ ຈາກສະພາແຫ່ງຊາດ 3 ປະເທດ ໄດ້ໃຫ້ກຽດເຂົ້າຮ່ວມຄື:

1. ສົມເດັດ ມະຫາ

ອ່ານຕໍ່ໜ້າ 2

## ຂະບວນລົດຖີບມິດຕະພາບ ແລະ ການແຂ່ງຂັນລົດຖີບ ເພື່ອຂໍ່ານັບຊົມເຊີຍກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ CLV ຄັ້ງທີ 1



(ສພຊ) ໃນຕອນເຊົ້າຂອງວັນທີ 6 ທັນວາ 2023, ທີ່ເດີ່ນສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ຈັດກິດຈະກຳຂະບວນຂີ່ລົດຖີບຂອງຄະນະນຳສາມປະເທດ ກຳປູເຈຍ-ລາວ-ຫວຽດນາມ ແລະ ການແຂ່ງຂັນຂີ່ລົດຖີບ ເພື່ອມິດຕະພາບ ແຂ່ງຂັນຊີງລາງວັນປະທານສະພາແຫ່ງຊາດ ແຫ່ງ

ອ່ານຕໍ່ໜ້າ 11

## ຮອງປະທານສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງຊົນເຜົ່າຈ້ວງກວາງຊີ ສປ ຈີນ ສຳເລັດການຢ້ຽມຢາມ ສປປ ລາວ



(ສພຊ) ສະຫາຍ ຟາງ ຊຸນມິງ ຮອງປະທານສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງຊົນເຜົ່າຈ້ວງກວາງຊີ ສປ. ຈີນ ພ້ອມດ້ວຍຄະນະ ໄດ້ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຢ່າງເປັນທາງການ ລະຫວ່າງວັນທີ 5-8 ທັນວາ 2023.

ໃນການເຄື່ອນໄຫວຄັ້ງນີ້, ສະຫາຍ ຟາງ ຊຸນມິງ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດລາວ, ພົບປະສອງຝ່າຍກັບປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງໃນການຢ້ຽມຂໍ່ານັບຄັ້ງນີ້, ສະຫາຍຮອງປະທານສະພາແຫ່ງຊາດ

ອ່ານຕໍ່ໜ້າ 4

## ກຳປູເຈຍ-ລາວ-ຫວຽດນາມ ປຶກສາຫາລື ການຮ່ວມມືດ້ານເສດຖະກິດ ວັດທະນະທຳ-ສັງຄົມ ຢູ່ສາມຫຼ່ຽມພັດທະນາ




ກອງປະຊຸມກ່ຽວກັບວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມ ໄດ້ຈັດຂຶ້ນໃນວັນທີ 5 ທັນວານີ້, ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ຫົວຂໍ້ ເພີ່ມທະວີການຮ່ວມມືຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດທາງດ້ານເສດຖະກິດ ຂອງກຳປູເຈຍ-ລາວ-ຫວຽດນາມ

ອ່ານຕໍ່ໜ້າ 4

**ຊົມເຊີຍຜົນສຳເລັດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ຢ່າງສຸດໃຈ!**

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ຣັດສະເພຍທິກາ ທິພະໄດ ຄຸນສຸດາຣີປະທານສະພາແຫ່ງຊາດແຫ່ງຣາຊະອານາຈັກ ກຳປູເຈຍ;

2. ທ່ານ ເວືອງ ດິງ ເຫວ້ ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ;

3. ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ນອກຈາກນັ້ນ, ຍັງມີບັນດາທ່ານຮອງປະທານສະພາແຫ່ງຊາດ, ທ່ານລັດຖະມົນຕີ, ປະທານ ແລະ ຮອງປະທານກຳມາທິການສະພາແຫ່ງຊາດ, ຮອງລັດຖະມົນຕີຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງແຜນການ ແລະ ການລົງທຶນ, ປະທານ ແລະ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ຈາກ 4 ແຂວງ ທີ່ຢູ່ໃນເຂດສາມຫຼ່ຽມພັດທະນາ CLV ຂອງ ສປປ ລາວ, ທ່ານເອກອັກຄະລັດຖະທູດ ແຫ່ງ ລາຊະອານາຈັກ ກຳປູເຈຍ ແລະ ທ່ານ ເອກອັກຄະລັດຖະທູດ ແຫ່ງ ສສ.ຫວຽດນາມ ປະຈຳ ສປປ ລາວ ແລະ ຕາງໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ 3 ປະເທດເຂົ້າຮ່ວມ ລວມທັງໝົດ 355 ທ່ານ.

ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໄດ້ມີ 3 ກອງປະຊຸມຍ່ອຍ ແບ່ງອອກເປັນ 3 ຂົງເຂດ ຄື:

1) ກອງປະຊຸມວຽກງານດ້ານການເມືອງ ແລະ ການຕ່າງປະເທດ;

2) ກອງປະຊຸມວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມ;

3) ກອງປະຊຸມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ກອງປະຊຸມ ຍັງໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານຕ່າງໆ ໃນເຂດສາມຫຼ່ຽມພັດທະນາຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານ ແລະ ໄດ້ມີການປະກອບຄຳຄິດຄຳເຫັນຈາກສະມາຊິກສະພາແຫ່ງຊາດ ຂອງບັນດາແຂວງ ທີ່ຢູ່ໃນເຂດສາມຫຼ່ຽມພັດທະນາ ຂອງ 3 ປະເທດ ຕໍ່ກັບການຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ, ແຜນງານ, ໂຄງການ ແລະ ຂໍ້ຕົກລົງຕ່າງໆ ທີ່ລັດຖະບານ ສາມປະເທດ ໄດ້ລົງນາມຮ່ວມກັນໃນເຂດສາມຫຼ່ຽມພັດທະນາ CLV ທີ່ສາມາດບັນລຸຜົນສຳເລັດໃນຫຼາຍດ້ານໂດຍສະເພາະພື້ນຖານໂຄ່ງລ່າງໃນເຂດສາມຫຼ່ຽມພັດທະນາ ໄດ້ຮັບການປັບປຸງ-ຍົກລະດັບໃຫ້ດີຂຶ້ນ ເພື່ອເປັນການສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ, ການຂົນສົ່ງ ແລະ ການທ່ອງທ່ຽວ ພ້ອມທັງການໄປມາຫາສູ່ກັນຂອງປະຊາຊົນ ຢູ່ເຂດສາມຫຼ່ຽມພັດທະນາ CLV ເປັນການປະກອບສ່ວນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການຍົກລະດັບໃຫ້ດີຂຶ້ນເປັນລຳດັບ.

ເຖິງຢ່າງໃດກໍຕາມ, ການພັດທະນາຢູ່ໃນບໍລິເວນເຂດສາມຫຼ່ຽມ CLV ຍັງມີຄວາມຮຽກຮ້ອງຕ້ອງການພັດທະນາຫຼາຍດ້ານກວ່ານີ້ ໂດຍສະເພາະການພັດທະນາດ້ານພື້ນຖານໂຄງລ່າງ, ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມບໍລິເວນຊາຍແດນ, ການພັດທະນາວຽກງານສຶກສາ ແລະ ສາທາລະນະສຸກ, ການສ້າງວຽກເຮັດງານທຳ ແລະ ລາຍໄດ້ ໃຫ້ແກ່ປະຊາຊົນຢູ່ໃນເຂດສາມຫຼ່ຽມພັດທະນາ CLV. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ແລະ ຄວາມພະຍາຍາມ ເພື່ອຊອກຫາວິທີການ ແລະ ມາດຕະການທີ່ສອດຄ່ອງ ເໝາະສົມ ເພື່ອເຮັດໃຫ້ເຂດດັ່ງກ່າວໄດ້ຮັບການພັດທະນາດີຂຶ້ນກ່ວາເກົ່າ. ພ້ອມກັນນີ້, ສະພາແຫ່ງຊາດ 3 ປະເທດ ຈະຕ້ອງໄດ້ສືບຕໍ່ຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ, ແຜນງານ, ໂຄງການ ແລະ ຂໍ້ຕົກລົງຕ່າງໆ ທີ່ລັດຖະບານ 3 ປະເທດໄດ້ລົງນາມຮ່ວມກັນໃຫ້ມີປະສິດທິພາບ ປະສິດທິຜົນ, ພ້ອມທັງສ້າງເງື່ອນໄຂເພື່ອອຳນວຍຄວາມສະດວກໃຫ້ແກ່ການປົກປັກຮັກສາຄວາມສະຫງົບ ແລະ ຄວາມປອດໄພ, ການເຊື່ອມໂຍງ-ເຊື່ອມຈອດ, ການພັດທະນາດ້ານເສດຖະກິດ, ການຮ່ວມມືທາງດ້ານວັດທະນະທຳ-ສັງຄົມ ແລະ ການສົ່ງເສີມຄວາມຈະເລີນກ້າວໜ້າ ແລະ ການພັດທະນາແບບຍືນຍົງໃນເຂດສາມຫຼ່ຽມພັດທະນາ CLV ເຮັດໃຫ້ກາຍເປັນອົງປະກອບທີ່ສຳຄັນໃນການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ ປີ 2025 ດ້ວຍການກຳນົດແນວທາງນະໂຍບາຍຂອງແຕ່ລະປະເທດຕໍ່ເຂດສາມຫຼ່ຽມພັດທະນາ ໃຫ້ມີຄວາມແທດເໝາະກັບສະພາບຕົວຈິງ ແລະ ສອດຄ່ອງກົມກຽວກັນ ພ້ອມກັນກ້າວໄປຂ້າງໜ້າ ໂດຍບໍ່ໃຫ້ປະຖິ້ມຜູ້ໃດໄວ້ຢູ່ເບື້ອງຫຼັງ.

ພາຍຫຼັງທີ່ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂອງກະຊວງທີ່ກ່ຽວຂ້ອງຂອງລັດຖະບານໃນໄລຍະຜ່ານມາ, ປະທານສະພາແຫ່ງຊາດຂອງ 3 ປະເທດ CLV ໄດ້ລົງນາມຖະແຫຼງການຮ່ວມກັນ ເຊິ່ງມີເນື້ອໃນສຳຄັນ ດັ່ງນີ້:

1. ດ້ານການເມືອງ ແລະ ວຽກງານການຕ່າງປະເທດ

1) ເຫັນດີສືບຕໍ່ຊຸກຍູ້ສົ່ງເສີມໃຫ້ລັດຖະບານ 3 ປະເທດຮ່ວມມືກັນຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ, ຂໍ້ຕົກລົງ, ແຜນປະຕິບັດງານ, ຄງການຮ່ວມມືຕ່າງໆ ທີ່ 3 ຝ່າຍໄດ້ລົງນາມກັນ ຢ່າງຕັ້ງໜ້າ;

2) ເຫັນດີສືບຕໍ່ຊຸກຍູ້ສົ່ງເສີມ ລັດຖະບານ 3 ປະເທດຮ່ວມມືກັນແກ້ໄຂບັນຫາການລັກລອບເຂົ້າ-ອອກເມືອງຜິດກົດໝາຍ, ການແຕ່ງດອງຜິດກົດໝາຍ ແລະ ການຕັ້ງພູມລຳເນົາຜິດລະບຽບກົດໝາຍ ຂອງປະຊາຊົນໃນຂອບເຂດບໍລິເວນຊາຍແດນ CLV;

3) ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນລະຫວ່າງສະພາແຫ່ງຊາດ 3 ປະເທດ ເປັນເພື່ອສົ່ງເສີມສັນຕິພາບ, ມິດຕະພາບ, ຄວາມສາມັກຄີ, ຄວາມໝັ້ນຄົງ ແລະ ການພັດທະນາແບບຍືນຍົງ ໃນບໍລິເວນເຂດສາມຫຼ່ຽມພັດທະນາ;

4) ຊຸກຍູ້ບັນດາສະມາຊິກສະພາແຫ່ງຊາດ ທີ່ປະຈຳຢູ່ແຂວງໃນເຂດສາມຫຼ່ຽມພັດທະນາ ມີການແລກປ່ຽນຄຳຄິດເຫັນ, ຮ່ວມກັນຕິດຕາມກວດກາ ແລະ ເກັບກຳບັນຫາສຳຄັນທີ່ພົ້ນເດັ່ນຂອງທ້ອງຖິ່ນ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດ ແລະ ລັດຖະບານ 3 ປະເທດ ເພື່ອຊອກຫາຊ່ອງທາງ ແລະ ມີມາດຕະການແກ້ໄຂ ທີ່ເໝາະສົມ;

1) ເຫັນດີສ້າງຕັ້ງຄະນະມິດຕະພາບສະມາຊິກລັດຖະສະພາ ໃນເຂດສາມຫຼ່ຽມພັດທະນາ CLV ເພື່ອຊຸກຍູ້ສົ່ງເສີມການພັດທະນາເສດຖະກິດ-ສັງຄົມແລະການຮ່ວມມືທາງດ້ານວັດທະນະທຳ;

3) ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ, ຂໍ້ຕົກລົງ, ແຜນປະຕິບັດງານ, ໂຄງການຮ່ວມມືຕ່າງໆ ທີ່ລັດຖະບານທັງ 3 ປະເທດ ໄດ້ລົງນາມຮ່ວມກັນ ໂດຍໃຫ້ມີການລົງຕິດຕາມກວດກາຮ່ວມກັນ ໃນໄລຍະເວລາ 3 ເດືອນກ່ອນເປີດກອງປະຊຸມສຸດຍອດລັດຖະສະພາສາມປະເທດ ແຕ່ລະຄັ້ງ;

3) ສືບຕໍ່ເພີ່ມທະວີຮັດແໜ້ນສາຍພົວພັນມິດຕະພາບ, ຄວາມສາມັກຄີ, ການຮ່ວມມືຮອບດ້ານລະຫວ່າງ3ປະເທດ, ສຸມໃສ່ການພັດທະນາເສດຖະກິດ-ສັງຄົມ, ການຮ່ວມມືດ້ານການເມືອງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍຄືການໄປມາຫາສູ່ກັນ ຂອງປະຊາຊົນ ເພື່ອການພັດທະນາແບບຍືນຍົງຂອງສາມປະເທດ;

2. ວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມ

1) ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ ລັດຖະບານ 3 ປະເທດ CLV ໃນການຈັດຕັ້ງປະຕິບັດແຜນປະຕິບັດງານ ວ່າດ້ວຍການເຊື່ອມໂຍງເສດຖະກິດ, ແຜນພັດທະນາການທ່ອງທ່ຽວ ຕາມຂອບການຮ່ວມມືໃນເຂດສາມຫຼ່ຽມພັດທະນາ CLV ແລະ ວິໄສທັດຮອດປີ 2030 ພ້ອມທັງຊຸກຍູ້ໃຫ້ລັດຖະບານ 3 ປະເທດຮັບຮອງເອົາແຜນແມ່ບົດ ວ່າດ້ວຍການພັດທະນາເສດຖະກິດ-ສັງຄົມ ຮອດປີ 2030 ໃນກອງປະຊຸມ CLV ຄັ້ງຕໍ່ໄປ;

2) ສືບຕໍ່ຊຸກຍູ້ສົ່ງເສີມລັດຖະບານ 3 ປະເທດ ໃຫ້ເອົາໃຈໃສ່ຮ່ວມມືກັນຢ່າງຫ້າວຫັນໃນການສ້າງສະພາບແວດລ້ອມທີ່ດີທາງດ້ານກົດໝາຍ, ຫຼຸດຜ່ອນຂັ້ນຕອນການດຳເນີນລະບຽບການທາງດ້ານເອກະສານ, ການພັດທະນາລະບົບໂຄງລ່າງພື້ນຖານໃນເຂດສາມຫຼ່ຽມພັດທະນາ, ການເສີມຂະຫຍາຍການເຊື່ອມຈອດ ເພື່ອສົ່ງເສີມການພົວພັນ ລະຫວ່າງປະຊາຊົນ ກັບ ປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ;

3) ສືບຕໍ່ຊຸກຍູ້ ລັດຖະບານ 3 ປະເທດ CLV ໃນການປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ, ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມຢູ່ເຂດສາມຫຼ່ຽມພັດທະນາ;

4) ສືບຕໍ່ໃຫ້ຍູ້ລັດຖະບານ 3 ປະເທດ ນຳເອົາບັນດາເປົ້າໝາຍແຜນການພັດທະນາເຂດສາມຫຼ່ຽມພັດທະນາ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນຕົນ ດ້ວຍການຈັດສັນງົບປະມານແຫ່ງລັດເຂົ້າໃສ່ຢ່າງເໝາະສົມ ແລະ ຍາດແຍ່ງແຫຼ່ງທຶນ ແລະ ເຕັກນິກວິຊາການຈາກສາກົນ;

5) ສືບຕໍ່ຊຸກຍູ້ລັດຖະບານ 3 ປະເທດ ພັດທະນາໂຄງລ່າງພື້ນຖານ, ການຄົມມະນາຄົມ, ຕະຫຼາດຊຸມຊົນ ແລະ ສ້າງສິ່ງອຳນວຍຄວາມສະດວກອື່ນໆຕາມບໍລິເວນຊາຍແດນຂອງສາມປະເທດ;

6) ສືບຕໍ່ຊຸກຍູ້ລັດຖະບານ 3 ປະເທດ ໃນການສົ່ງເສີມ ແລະ ການແລກປ່ຽນຄວາມຮູ້, ປະສົບການ ແລະ ຄວາມເປັນຊ່ຽວຊານ ເພື່ອສະໜັບສະໜູນການພັດທະນາດ້ານເຕັກນິກ, ການສຶກສາ ແລະ ການຝຶກອົບຮົມເຕັກນິກວິຊາຊີບ, ວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ໃນຂົງເຂດທີ່ກ່ຽວຂ້ອງ;

7) ສືບຕໍ່ຊຸກຍູ້ລັດຖະບານ 3 ປະເທດ ໃຫ້ບຸລິມະສິດໃນການໂຄສະນາເຜີຍແຜ່ ແລະ ເລັ່ງຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ, ແຜນປະຕິບັດງານຕ່າງໆ ທີ່ໄດ້ລົງນາມຮ່ວມກັນ ເພື່ອໃຫ້ມີຄວາມເຂົ້າໃຈເປັນເອກະພາບກັນ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;

3. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

1) ສະແດງຄວາມຊົມເຊີຍ ກົນໄກການຮ່ວມມື ຂອງສາມກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ແລະ ຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງລັດຖະບານແລະອຳນາດການປົກຄອງ ໃນເຂດສາມຫຼ່ຽມພັດທະນາຂອງ 3 ປະເທດ;

2) ໄດ້ເຫັນດີ ແລະ ເປັນເອກະພາບກັນ ໃນການກຳນົດທິດທາງ ແລະ ແຜນການ ເພື່ອໃຫ້ສະພາແຫ່ງຊາດ 3 ປະເທດ ສືບຕໍ່ຕິດຕາມກວດກາຮ່ວມກັນ ແລະ ຊຸກຍູ້ລັດຖະບານສາມປະເທດ ໃນການຮ່ວມມືທາງດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນຊຸມປີຕໍ່ໜ້າ ໂດຍສະເພາະການຈັດຕັ້ງປະຕິບັດບັນດາເປົ້າໝາຍໃນຂົງເຂດວຽກງານ ປກສ-ປກຊ ຕາມຂອບການຮ່ວມມື CLV-DTA ທີ່ໄດ້ກ່າວມາຂ້າງເທິງ ດ້ວຍການມີສ່ວນຮ່ວມຂອງປະຊາຊົນໃຫ້ບັນລຸຜົນສຳເລັດຕາມທີ່ໄດ້ກຳນົດໄວ້.

ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 1 ໄດ້ເຫັນດີເປັນເອກະພາບຮັບຮອງເອົາຄຳຂວັນ ສັນຕິພາບ, ມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມື ເພື່ອຄວາມຈະເລີນກ້າວໜ້າ ແລະ ຄວາມຍືນຍົງ ເພື່ອເປັນວິໄສທັດໃນການຮ່ວມມືລະຫວ່າງສາມສະພາແຫ່ງຊາດ CLV;

ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 1 ພິຈາລະນາການສ້າງຕັ້ງກົນໄກການຮ່ວມມືຂົງເຂດວັດທະນະທຳ-ສັງຄົມຂອງສາມສະພາແຫ່ງຊາດ CLV ເພື່ອນຳໄປພິຈາລະນາຮັບຮອງໃນກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງຕໍ່ໄປ ທີ່ຈະດຳເນີນໃນ 2 ປີ ຕໍ່ໜ້າ ທີ່ ສສ. ຫວຽດນາມ.

## ເລື່ອງ ເດັ່ນ ຂ່າວ ເດັດ

***# ຄັດໂດຍ: ທອມສະນິດ***

*❐ ເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 48 ປີ (2 ທັນວາ 1975-2 ທັນວາ 2023) ຜ່ານການກວດກາ ຄົ້ນຄວ້າຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຂອງລະບົບຍຸຕິທຳ ລັດຖະບານໄດ້ສະເໜີປະທານປະເທດ ແຫ່ງ ສປປ ລາວ ອອກລັດຖະດຳລັດວ່າດ້ວຍການໃຫ້ອະໄພຍະໂທດແກ່ນັກໂທດສະບັບເລກທີ 219/ປປທ, ລົງວັນທີ 21 ພະຈິກ 2023 ຕົກລົງໃຫ້ອະໄພຍະໂທດແກ່ນັກໂທດ 1.824 ຄົນ, ຍິງ 238 ຄົນ, ຕ່າງປະເທດ 16 ຄົນ; ໃນນີ້, ໃຫ້ອະໄພຍະໂທດດ້ວຍການຫຼຸດຜ່ອນໂທດ 1.602 ຄົນ, ຍິງ 200 ຄົນ, ຄົນຕ່າງປະເທດ 13 ຄົນ ແລະ ອະໄພຍະໂທດດ້ວຍການປ່ອຍຕົວ 222 ຄົນ, ຍິງ 38 ຄົນ, ຄົນຕ່າງປະເທດ 3 ຄົນ.*

***ໜສພ. ປະຊາຊົນ 06/12/2023***

*❐ ບົດລາຍງານການຕິດຕາມສະພາບເສດຖະກິດລາວ ຂອງທະນາຄານໂລກ ໃຫ້ຮູ້ວ່າ: ໃນປີ 2023 ເສດຖະກິດຂອງລາວໄດ້ຄ່ອຍໆຟື້ນຕົວເປັນກ້າວໆ ພາຍຫຼັງການລະບາດຂອງພະຍາດໂຄວິດ-19 ປີ 2020 ໂດຍຄາດຄະເນການເຕີບໂຕຂອງ GDP ເທົ່າກັບ 3,7% ເພີ່ມຂຶ້ນ ຈາກ 2,7% ປີ 2022 ການເຕີບໂຕດັ່ງກ່າວ ສ່ວນໃຫຍ່ແມ່ນໄດ້ຮັບການຊຸກຍູ້ຈາກຂະແໜງການທ່ອງທ່ຽວ, ການຂົນສົ່ງ ແລະ ໂລຈິສຕິກ ທີ່ມີການຂະຫຍາຍຕົວ ແລະ ການລົງທຶນຂອງຕ່າງປະເທດທີ່ສູງຂຶ້ນ ແຕ່ວ່າອັດຕາການເຕີບໂຕ ກໍຍັງຕໍ່າກວ່າອັດຕາທີ່ຄາດການໄວ້ກ່ອນໜ້ານີ້ ອັດຕາເງິນເຟີ້ທີ່ສູງໄດ້ເພີ່ມຄ່າບໍລິໂພກ ແລະ ຕົ້ນທຶນການດຳເນີນທຸລະກິດ ເຊິ່ງເຮັດໃຫ້ຄົວເຮືອນຫຼຸດຜ່ອນຄ່າໃຊ້ຈ່າຍດ້ານອາຫານ, ການສຶກສາ ແລະ ສຸຂະພາບ ລວມທັງຫຼຸດຜ່ອນເງິນຝາກ-ເງິນອອມ ອັນເປັນຜົນເຮັດໃຫ້ຫຼາຍຄອບຄົວສ່ຽງຕົກໄປຢູ່ໃນສະພາບທຸກຍາກ.*

***ໜສພ. ວຽງຈັນໃໝ່ 06/12/2023***

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານ ທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

**1.3. ວຽກງານຈຸດສຸມ**

ສືບຕໍ່ສຸມໃສ່ຊີ້ນໍາການຈັດຕັ້ງປະຕິບັດບັນດາມາດຕະການ ທີ່ໄດ້ກໍານົດໃນມະຕິຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 6, ຄັ້ງທີ 7 ຂອງສະໄໝທີ XI ແລະ ມະຕິຂອງສະພາແຫ່ງຊາດຄັ້ງຜ່ານໆມາ ແລະ ກອງປະຊຸມເທື່ອນີ້, ໃນນັ້ນ: ຈະໄດ້ສຸມໃສ່ວຽກງານຈໍານວນໜຶ່ງຄື:

1) ສືບຕໍ່ເອົາໃຈໃສ່ປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

- ສຸມໃສ່ຈັດຕັ້ງປະຕິບັດ 4 ໜ້າທີ່ໃຫຍ່ 26 ແຜນງານຂອງກະຊວງປ້ອງກັນປະເທດ ແລະ 4 ແຜນງານ 41 ໂຄງການຂອງກະຊວງປ້ອງກັນຄວາມສະຫງົບ ໂດຍສຸມໃສ່ສືບຕໍ່ພັດທະນາຈຸດສຸມຕິດພັນກັບປັບປຸງກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດຮອບດ້ານ, ເອົາໃຈໃສ່ປັບປຸງກໍ່ສ້າງກໍາລັງປະກອບອາວຸດ, ພະນັກງານນັກຮົບໃຫ້ເຂັ້ມແຂງ ເປັນຫຼັກແຫຼ່ງການປະຕິບັດໜ້າທີ່ວຽກງານ ປກຊ-ປກສ ທົ່ວປວງຊົນຮອບດ້ານ; ພ້ອມກັນນັ້ນ, ກໍກະກຽມຄວາມພ້ອມການສະເຫຼີມສະຫຼອງວັນສໍາຄັນຕ່າງໆຂອງພັກ, ຂອງລັດ.



- ສືບຕໍ່ອີາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນແມ່ນ: ສືບຕໍ່ອີາໃຈໃສ່ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນແມ່ນ: ລົງເລິກການຈັດຕັ້ງ ປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂບັນຫາຢາເສບຕິດໃຫ້ຫຼຸດລົງຕິດພັນກັບການຄຸ້ມຄອງອາວຸດເຖື່ອນ ແລະ ອາວຸດດັດແປງດ້ວຍມາດຕະການແກ້ໄຂຮູບແບບໃໝ່; ສ້າງແຜນການເຄື່ອນໄຫວວຽກງານເພື່ອການຕ້ານ ແລະ ສະກັດກັ້ນການກໍ່ອາຊະຍາກໍາທາງໄຊເບີ ລວມທັງການນໍາໃຊ້ສື່ສັງຄົມອອນລາຍ ເພື່ອໂຈມຕີແນວທາງນະໂຍບາຍພັກ-ລັດ ແລະ ການນໍາຂັ້ນສູງ.

2) ສືບຕໍ່ສຸມໃສ່ປະຕິບັດບັນດາມາດຕະການຕ່າງໆ ເພື່ອເຮັດໃຫ້ເສດຖະກິດມະຫາພາກມີຄວາມສະຖຽນລະພາບ ແລະ ບໍ່ໃຫ້ຕົກເຂົ້າສູ່ວິກິດ, ໃນນັ້ນ ຈະໄດ້ສຸມໃສ່ບັງຄັບໃຊ້ມາດຕະການຕ່າງໆທີ່ວາງອອກເຂົ້າໃນການແກ້ໄຂຕົວຈິງໃນບັນຫາທີ່ມີຄວາມບອບບາງ, ອ່ອນໄຫວ ແລະ ເໜັງຕີງແຮງ ເຊັ່ນ: ບັນຫາອັດຕາແລກປ່ຽນ, ບັນຫາເງິນເຟີ້, ລາຄາສິນຄ້າໃຫ້ເໜັງຕີງຊ້າລົງ ກ້າວໄປເຖິງຈຸດທີ່ມີຄວາມສະຖຽນກວ່າເກົ່າ

3) ສືບຕໍ່ຍູ້ແຮງການປັບປຸງ ແລະ ປະຕິຮູບບັນດາລັດວິສາຫະກິດທີ່ເຄື່ອນໄຫວບໍ່ມີປະສິດທິຜົນ ໃຫ້ສໍາເລັດໄວຂຶ້ນ ໂດຍສະເພາະ ລັດວິສາຫະກິດໄຟຟ້າລາວ, ທະນາຄານນະໂຍບາຍ, ລັດວິສາຫະກິດ ຫວຍພັດທະນາລາວ, ການບິນລາວ ແລະ ອື່ນໆ... ໃຫ້ເຂັ້ມແຂງ ແລະ ເຄື່ອນໄຫວມີປະສິດທິຜົນກວ່າເກົ່າພາຍໃຕ້ການຊີ້ນໍາໂດຍກົງຂອງຄະນະປະຕິຮູບລັດວິສາຫະກິດຂັ້ນສູນກາງ.

4) ສຸມໃສ່ຍູ້ແຮງການສົ່ງເສີມການຜະລິດກະສິກໍາເພື່ອຄໍ້າປະກັນສະບຽງອາຫານ, ທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກໃຫ້ຫຼາຍ; ສືບຕໍ່ສົ່ງເສີມຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ແຂງແຮງ

ອ່ານຕໍ່ສະບັບໜ້າ

# ການຈັດຕັ້ງປະຕິບັດແຜນເງິນຕາ ໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

ສໍາລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທຫລ ໄດ້ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວ ຕາມລະບຽບການຢ່າງເປັນປົກກະຕິ; ໄດ້ສ້າງນິຕິກໍາ ແລະ ປັບປຸງລະບຽບການທີ່ຕິດພັນ ເພື່ອຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນທຸກຮູບແບບ ຈໍານວນ 17 ສະບັບ ໃນນັ້ນ, ພົ້ນເດັ່ນແມ່ນ ອອກດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ, ດໍາລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ (ສະບັບປັບປຸງ) ແລະ ຄົ້ນຄວ້ານິຕິກໍລຸ່ມກົດໝາຍຈໍານວນໜຶ່ງ. ນອກນີ້, ຍັງໄດ້ຈັດຕັ້ງປະຕິບັດວຽກງານຊຸກຍູ້ສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນຂອງປະຊາຊົນຜູ້ທີ່ມີລາຍໄດ້ຕໍ່າ ຕາມນະໂຍບາຍຂອງລັດຖະບານ ລວມທັງ ສ້າງຄວາມເຂັ້ມແຂງໃຫ້ບັນດາທະນາຄານບ້ານ ແລະ ການສົ່ງເສີມວຽກງານປະຊາສຶກສາທາງດ້ານການເງິນ,ຮອດເດືອນ 09/2023 ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ມີທັງໝົດ 05 ປະເພດ ລວມທັງໝົດ 267 ແຫ່ງ ເພີ່ມຂຶ້ນ 49 ແຫ່ງ ເມື່ອທຽບໃສ່ທ້າຍປີ 2011, ຊຶ່ງສາມາດໃຫ້ບໍລິການ ຢູ່ 177 ບ້ານ ຂອງ 61 ເມືອງໃນທົ່ວປະເທດ.

**5) ວຽກງານພັດທະນາ ແລະ ຄຸ້ມຄອງລະບົບຊໍາລະ.**



ຮອດປັດຈຸບັນໄດ້ສໍາເລັດການປັບປຸງ ແລະ ຮຽບຮຽງຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ ເພື່ອກະກຽມນໍາເຂົ້າກອງປະຊຸມສະພາແຫ່ງຊາດ, ນອກນັ້ນ ໄດ້ພັດທະນາລະບົບການຊໍາລະທັງພາຍໃນ ແລະ ເຊື່ອມຈອດກັບສາກົນຄື:

+ ການຊໍາລະພາຍໃນ:

- ໄດ້ສໍາເລັດການເຊື່ອມຕໍ່ກັບລະບົບການເກັບລາຍຮັບທັນສະໄໝຂອງກະຊວງການເງິນ (FinLink) ໂດຍຜ່ານລະບົບຊໍາລະຍ່ອຍ (LapNet) ເພື່ອເຮັດໃຫ້ການເກັບລາຍຮັບ ຫຼື ການຊໍາລະພັນທະໃຫ້ລັດຂອງພາກທຸລະກິດ ແລະ ພາກປະຊາຊົນມີຄວາມສະດວກ ແລະ ລວມສູນ.

- ໄດ້ຄົ້ນຄວ້າອອກອະນຸຍາດ ແລະ ປັບປຸງຜະລິດຕະພັນຊໍາລະ 140 ກໍລະນີ, ໃນນີ້, 82 ກໍລະນີ ແມ່ນຜະລິດຕະພັນຂອງທະນາຄານທຸລະກິດ ແລະ 58 ກໍລະນີ ແມ່ນຜະລິດຕະພັນຂອງຜູ້ໃຫ້ບໍລິການຊໍາລະທີ່ບໍ່ແມ່ນທະນາຄານ; ການຊໍາລະຍ່ອຍກໍຄືການໂອນ ຫລື ການຊໍາລະຂອງຜູ້ຊົມໃຊ້ຜ່ານ Mobile App ມູນຄ່າການເຮັດທຸລະກໍາ ສະເລ່ຍຕໍ່ເດືອນ ທຽບປີ 2021 ກັບ 6 ເດືອນຕົ້ນປີ 2023, ມີທ່າອ່ຽງເພີ່ມຂຶ້ນ, ສະກຸນກີບ ຂ້າມທະນາຄານ ເພີ່ມຂຶ້ນ 391%. ສໍາລັບການໂອນ ແລະ ຊໍາລະພາຍໃນ ທທກ ເອງ (ທັງເງິນກີບ ແລະ ເງິນຕາຕ່າງປະເທດ) ເຫັນວ່າເງິນກີບເພີ່ມຂຶ້ນ 294%, ໂດລາເພີ່ມຂຶ້ນ 670% ແລະ ເງິນບາດເພີ່ມຂຶ້ນ 253%;

- ການນໍາໃຊ້ເງິນອີເລັກໂຕຣນິກ (E-Monney) ເຫັນວ່າມີການຂະຫຍາຍຕົວຫຼາຍເຊັ່ນກັນ ໂດຍສະເພາະແມ່ນການອອກເງິນອີເລັກໂຕຣນິກຂອງບໍລິສັດໂທລະຄົມມະນາຄົມ (U-Monney ແລະ M-Monney ເປັນຕົ້ນ) ເຊິ່ງສາມາດນໍາໃຊ້ໄດ້ຢ່າງກວ້າງຂວາງວ່ອງໄວ ໂດຍຜ່ານປ່ອງບໍລິການຂອງຕົວແທນບໍລິສັດ

ອ່ານຕໍ່ສະບັບໜ້າ

## ເພີ່ມທະວີ...

(ຕໍ່ຈາກໜ້າ 1)

ຈະຈັດຂຶ້ນໃນອີກ 2 ປີຂ້າງໜ້າ. ຈາກນັ້ນ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ກໍໄດ້ມອບຄ້ອນການເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 2 ໃຫ້ແກ່ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ.

ຈາກນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວປິດກອງປະຊຸມວ່າ: ກອງປະຊຸມສຸດຍອດລັດຖະສະພາກໍາປູເຈຍ-ລາວ-ຫວຽດນາມ (CLV ) ຄັ້ງທີ 1 ພາຍໃຕ້ຫົວຂໍ້: "ເພີ່ມທະວີບົດບາດຂອງລັດຖະສະພາ ໃນການສົ່ງເສີມການຮ່ວມມືຮອບດ້ານ ລະຫວ່າງກໍາປູເຈຍ-ລາວ-ຫວຽດນາມ", ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ມາຍັງບັນດາທ່ານຫົວໜ້າຄະນະຜູ້ແທນ, ສະມາຊິກສະພາແຫ່ງຊາດ, ຄະນະນໍາ, ຕາງໜ້າຈາກບັນດາກະຊວງ ແລະ ບັນດາອົງການປົກຄອງແຂວງຢູ່ໃນເຂດສາມຫຼ່ຽມພັດທະນາຂອງ 3 ປະເທດ ໄດ້ເຂົ້າຮ່ວມຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄໍາຄິດຄໍາເຫັນຢ່າງຫ້າວຫັນ ແລະ ກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ I ໄດ້ຮັບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍຢ່າງຈົບງາມ.

ກອງປະຊຸມສຸດຍອດລັດຖະສະພາ ກໍາປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໄດ້ປຶກສາຫາລື ແລະ ໄດ້ປະກອບຄໍາຄິດຄໍາເຫັນຮ່ວມກັນໃນແຕ່ລະຂົງເຂດ ໂດຍສະເພາະແມ່ນ: ວຽກງານການເມືອງ-ການຕ່າງປະເທດ, ວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທໍາ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ພ້ອມນັ້ນ, ໃນໄລຍະດໍາເນີນກອງປະຊຸມ ບັນດາຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດແຜນດໍາເນີນງານຕ່າງໆ ໃນເຂດສາມຫຼ່ຽມພັດທະນາ ຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານ ເຊິ່ງເຫັນວ່າ ລັດຖະບານ ແລະ ຂະແໜງການກ່ຽວຂ້ອງຕ່າງໆຂອງ 3 ປະເທດ ໄດ້ມີການຈັດຕັ້ງປະຕິບັດບັນດາສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ໄດ້ຕົກລົງຮ່ວມກັນຕາມຂອບການຮ່ວມມືໃນເຂດສາມຫຼ່ຽມພັດທະນາ ແລະ ບັນລຸໄດ້ຜົນສໍາເລັດໃນຫຼາຍດ້ານ ໂດຍສະເພາະພື້ນຖານໂຄງລ່າງ ໃນເຂດສາມຫຼ່ຽມພັດທະນາ ໄດ້ຮັບການປັບປຸງ-ຍົກລະດັບ ເຊິ່ງເປັນການສົ່ງເສີມ ແລະ ອໍານວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວຢູ່ເຂດສາມຫຼ່ຽມພັດທະນາ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການແກ້ໄຂດີຂຶ້ນເປັນກ້າວໆ.

ແຕ່ເຖິງຢ່າງໃດກໍຕາມ, ຄວາມຮຽກຮ້ອງຕ້ອງການ ແລະ ຄວາມຈໍາເປັນດ້ານການພັດທະນາໃນເຂດສາມຫຼ່ຽມເສດຖະກິດ ເປັນຕົ້ນ ການພັດທະນາພື້ນຖານໂຄງລ່າງ, ດ້ານການສຶກສາ ແລະ ສາທາລະນະສຸກ, ການສ້າງອາຊີບວຽກເຮັດງານທໍາ, ການສ້າງລາຍໄດ້ໃຫ້ແກ່ປະຊາຊົນ ຍັງຈໍາກັດ ເນື່ອງຈາກຂາດເຂີນງົບປະມານ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນເຂດດັ່ງກ່າວຍັງພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ສະມາຊິກສະພາແຫ່ງຊາດ ຕ້ອງໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານຂອງຕົນ ຊອກຫາວິທີທາງແກ້ໄຂ ເຮັດໃຫ້ເຂດດັ່ງກ່າວໄດ້ຮັບການພັດທະນາໃຫ້ດີຂຶ້ນກ່ວາເກົ່າ. ພ້ອມກັນນີ້, ສາມສະພາແຫ່ງຊາດ ຈະຕ້ອງສືບຕໍ່ຕິດຕາມກວດກາການຈັດຕັ້ງປະຕິບັນດາສັນຍາ ແລະ ໂຄງການຕ່າງໆ ທີ່ລັດຖະບານສາມປະເທດໄດ້ລົງນາມຮ່ວມກັນໃຫ້ມີປະສິດທິພາບ, ພ້ອມທັງສ້າງເງື່ອນໄຂການເຊື່ອມໂຍງເຊື່ອມຈອດ, ສ້າງຄວາມຍືນຍົງ ແລະ ຄວາມຈະເລີນກ້າວໜ້າທາງດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ໃນເຂດ CLV ໃຫ້ກາຍເປັນສ່ວນສໍາຄັນໜຶ່ງໃນການປະຕິບັດວິໄສທັດປະຊາຄົມອາຊຽນ ປີ 2025 ດ້ວຍການກໍານົດແນວທາງນະໂຍບາຍຂອງແຕ່ລະປະເທດຕໍ່ເຂດສາມຫຼ່ຽມພັດທະນາໃຫ້ມີຄວາມແທດເໝາະ ແລະ ສອດຄ່ອງກົມກຽວກັນ.

ອີກບັນຫາໜຶ່ງທີ່ສໍາຄັນ ແລະເປັນສິ່ງທ້າທາຍຕໍ່ການພັດທະນາເຂດສາມຫຼ່ຽມແມ່ນບັນຫາທຶນຮອນ ທີ່ທັງສາມປະເທດຕ່າງກໍມີຂໍ້ຈໍາກັດ. ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນທີ່ສະພາແຫ່ງຊາດທັງສາມປະເທດ ຕ້ອງໄດ້ຊຸກຍູ້ຊ່ອຍລັດຖະບານ ໃນການຂົນຂວາຍດຶງດູດເອົາການຊ່ວຍເຫຼືອການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ກໍຄືຈາກພາກເອກະຊົນຜ່ານກົນໄກ ແລະ ເວທີລັດຖະສະພາໃນລະດັບພາກພື້ນ ແລະ ສາກົນ ເພື່ອໃຫ້ເຂົາເຈົ້າເຫັນໄດ້ທ່າແຮງຂອງ 3 ປະເທດ ແລະ ເຂົ້າມາລົງທຶນໃນເຂດສາມຫຼ່ຽມໃຫ້ຫຼາຍຂຶ້ນຕື່ມ.

ຂໍຮຽກຮ້ອງໃຫ້ສາມສະພາແຫ່ງຊາດ ເພີ່ມທະວີຮັດແໜ້ນສາຍພົວພັນມິດຕະພາບ, ຄວາມສາມັກຄີ, ການຮ່ວມມືຮອບດ້ານລະຫວ່າງສາມປະເທດ, ສຸມໃສ່ການພັດທະນາເສດຖະກິດ-ສັງຄົມ, ການເມືອງ, ການຮ່ວມມືດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສ້າງເງື່ອນໄຂຮອບດ້ານໃຫ້ແກ່ການຮ່ວມມືດ້ານວັດທະນະທໍາ, ທ່ອງທ່ຽວ ເພື່ອໃຫ້ປະຊາຊົນມີສ່ວນຮ່ວມເຂົ້າໃນການພັດທະນາແບບຍືນຍົງ ໂດຍມອບໃຫ້ກໍາມາທິການຕ່າງໆທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ CLV ນໍາເອົາເນື້ອໃນຂອງຖະແຫຼງການຮ່ວມກອງປະຊຸມຄັ້ງປະຫວັດສາດນີ້ໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ອວຍພອນໃຫ້ມູນເຊື້ອແຫ່ງຄວາມສາມັກຄີ, ການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນແລະ ກັນ ລະຫວ່າງ ກໍາປູເຈຍ, ຫວຽດນາມ ແລະ ລາວ ຈົ່ງຈະເລີນງອກງາມ ແລະ ໝັ້ນຄົງຂະໜົງແກ່ນຕະຫຼອດໄປ.

**(ພາບ: ກົມສື່ມວນຊົນ ສພຊ, ຂ່າວ: ນາງ ສຸມິນທາ ງາໄຊ)**

# ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ

ຕໍ່ຈາກສະບັບກ່ອນ...

- ການກຳນົດອາຍຸການຮັບບຳນານ ຂອງນາຍທະຫານຕາມກົດໝາຍ ຖືກຕ້ອງ ແລະ ສອດຄ່ອງ ແຕ່ການຈັດຕັ້ງປະຕິບັດຕົວຈິງ ຍັງເຫັນວ່ານາຍທະຫານຈຳນວນໜຶ່ງອາຍຸເກີນກວ່າກົດໝາຍກຳນົດ;

- ການຍົກຂັ້ນເງິນເດືອນໃຫ້ນາຍທະຫານທີ່ບໍ່ມີເງື່ອນໄຂເລື່ອນຊັ້ນ ແຕ່ລະຊັ້ນຕາມກົດໝາຍກຳນົດ ເຫັນວ່າໃຊ້ເວລາດົນໂພດ;

- ການເສຍອົງຄະ: ເຫັນ



ວ່າການກຳນົດເນື້ອໃນຂອງມາດຕານີ້ຍັງບໍ່ທັນສອດຄ່ອງກັບບາງມາດຕາຂອງກົດໝາຍວ່າດ້ວຍການປະກັນສັງຄົມ ເປັນຕົ້ນແມ່ນ ມາດຕາ 11, 14 ແລະ ມາດຕາ 22.

2.5.ບັນຫາທີ່ຕັ້ງຂຶ້ນໃໝ່

- ມາດຕາ 5 ຫຼັກການພື້ນຖານໃນການຄຸ້ມຄອງນາຍທະຫານ: ສະເໜີເພີ່ມເນື້ອໃນເຂົ້າຕື່ມອີກ 1 ຂໍ້ ເປັນຂໍ້ທີ 6 ຫຼັກການສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;

- ມາດຕາ 18 ຂັ້ນ ແລະ ຊັ້ນ ຂອງນາຍທະຫານ: ຂັ້ນນາຍພົນ ຄວນເພີ່ມອີກຊັ້ນໜຶ່ງ ຫຼື ບໍ່;

- ມາດຕາ 21 ສິດຕົກລົງກ່ຽວກັບຊັ້ນຂອງນາຍທະຫານ: ສິດໃນການຕົກລົງ ເລື່ອນ

ອ່ານຕໍ່ສະບັບໜ້າ

# ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ຕໍ່ຈາກສະບັບກ່ອນ...

3. ຕໍ່ບັນຫາທີ່ຕັ້ງຂຶ້ນ

\+ ບັນຫາທີ່ບໍ່ທັນໄດ້ກຳນົດໃສ່ໃນກົດໝາຍສະບັບປັດຈຸບັນ ແຕ່ຜ່ານການຈັດຕັ້ງປະຕິບັດ ເຫັນວ່າຄວນກຳນົດໃສ່ການກຳນົດເນື້ອໃນກ່ຽວກັບການກຳນົດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນ, ຕຳແໜ່ງ, ອາຍຸກະສຽນ ແລະ ອື່ນໆ ຈິດໃຈສະເໜີຢາກໃຫ້ກຳນົດເປັນເອ



ກະພາບກັນ ໃນສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງແມ່ນກຳລັງປະກອບອາວຸດອັນດຽວກັນ ພາຍໃຕ້ການຊີ້ນຳ-ນຳພາ ເດັດຂາດໂດຍກົງຂອງພັກ ແລະ ບົນພື້ນຖານຈຸດພິເສດ;

- ດ້ານນະໂຍບາຍ ໂດຍສະເພາະແມ່ນບັນຫາທີ່ຕິດພັນກັບ ນາຍ ແລະ ພົນຕຳຫຼວດຂອງພວກເຮົາທີ່ໄປປະຈຳຢູ່ສະພາແຫ່ງຊາດ, ສະພາເຂດ, ຫ້ອງການຄະນະກຳມະການ ປກຊ-ປກສ ສູນກາງ ລວມທັງອົງການຜູ້ຕາງໜ້າກະຊວງປ້ອງກັນຄວາມ

ອ່ານຕໍ່ສະບັບໜ້າ

## ຮອງປະທານ...

(ຕໍ່ຈາກໜ້າ 1)

ໄດ້ສະແດງຄວາມຍິນດີຮັບຕ້ອນສະຫາຍ ຟາງ ຊຸນມິງ ພ້ອມດ້ວຍຄະນະ ແລະ ຕີລາຄາສູງຜົນການພົບປະສອງຝ່າຍຮ່ວມກັບສະຫາຍ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຈີນ ທັງສະແດງຄວາມຫວັງວ່າສອງອົງການນິຕິບັນຍັດຂອງສອງປະເທດ ທັງຂັ້ນທ້ອງຖິ່ນ ກໍຄືສູນກາງ ຈະສືບຕໍ່ຮ່ວມມືເຊິ່ງກັນ ແລະ ກັນ ເພື່ອເສີມສ້າງສາຍພົວພັນມິດຕະພາບ, ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມື ລະຫວ່າງສອງປະທານສະພາແຫ່ງຊາດລາວ ແລະ ຈີນ ໃນເດືອນກັນຍາຜ່ານມາ ແລະ ຂໍ້ຕົກລົງອື່ນໆຂອງສອງປະເທດ ກໍຄືສອງອົງການນິຕິບັນຍັດ.

ໂອກາດດັ່ງກ່າວ, ສະຫາຍ ຟາງ ຊຸນມິງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງສະຫາຍຮອງປະທານສະພາແຫ່ງຊາດລາວພ້ອມດ້ວຍຄະນະ ທັງແຈ້ງໃຫ້ຊາບກ່ຽວກັບຜົນການພົບປະສອງຝ່າຍກັບປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ. ພ້ອມດຽວກັນນີ້, ຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບຂອງສອງຊາດຈີນ-ລາວ ກໍຄືສອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ສະພາແຫ່ງຊາດລາວ ໃນໄລຍະຜ່ານມາຈົນເຖິງປັດຈຸບັນ; ພ້ອມນັ້ນ, ສະຫາຍ ຍັງໄດ້ສະແດງຄວາມເຫັນດີໃຫ້ມີການສືບຕໍ່ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນໃນທຸກໆຂົງເຂດ ຕື່ມອີກ.

ສຳລັບການພົບປະ ລະຫວ່າງກຳມາທິການວຽກງານສະມາຊິກສະພາແຫ່ງຊາດລາວກັບສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງຊົນເຜົ່າຈ້ວງກວາງຊີ ສປ ຈີນ ເຊິ່ງທັງສອງຝ່າຍໄດ້ແຈ້ງໃຫ້ກັນ ແລະ ກັນຊາບໂດຍຫຍໍ້ກ່ຽວກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ພາລະບົດບາດຂອງສະພາສູນກາງ ແລະ ສະພາທ້ອງຖິ່ນ ທັງໄດ້ຕີລາຄາສູງກ່ຽວກັບການພົວພັນ ແລະ ການຮ່ວມມືສອງຝ່າຍ ລາວ-ຈີນ, ການພົວພັນ ແລະ ຮ່ວມມື ລະຫວ່າງສອງສະພາ ລາວ-ຈີນ. ພ້ອມທັງປຶກສາຫາລືທິດທາງການພົວພັນຮ່ວມມືສອງຝ່າຍໃນຕໍ່ໜ້າ ເປັນຕົ້ນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດຂັ້ນສູນກາງຂອງສອງປະເທດ, ສືບຕໍ່ແລກປ່ຽນຄະນະຜູ້ແທນ, ທັດສະນະສຶກສາ ແລະ ອື່ນໆ.

ນອກຈາກນີ້, ສະຫາຍ ຟາງ ຊຸນມິງ ພ້ອມດ້ວຍຄະນະ ຍັງໄດ້ເດີນທາງໄປຢ້ຽມຢາມສູນທົດລອງແນວພັນພືດທີ່ດີ ລາວ-ຈີນ (ບ້ານທ່າດອກຄຳ ເມືອງໄຊທານີ ນະຄອນຫຼວງວຽງຈັນ), ເຂົ້າຮ່ວມເປັນສັກຂີພິຍານໃນພິທີເຊັນບົດບັນທຶກຄວາມເຂົ້າໃຈໂຄງການສາທິດດ້ານວິຊາການ ແລະ ການຫຼຸດຜ່ອນຄວາມທຸກຍາກຮ່ວມມື ສປປ ລາວ- ສປ ຈີນ ລະຫວ່າງກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ກັບສູນພັດທະນາໂຄງການທຶນຊ່ວຍເຫຼືອຕ່າງປະເທດເພື່ອຟື້ນຟູການພັດທະນາຊົນນະບົດກວາງຊີ ສປ ຈີນ, ພົບປະເຮັດວຽກກັບສະຖານກົງສູນ ສປ ຈີນ ປະຈຳແຂວງຫຼວງພະບາງ, ພົບປະເຮັດວຽກກັບສະພາປະຊາຊົນແຂວງຫຼວງພະບາງ ແລະ ເຊັນບົດບັນທຶກການຮ່ວມມືລະຫວ່າງສະພາປະຊາຊົນແຂວງຫຼວງພະບາງ ກັບສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງຊົນເຜົ່າຈ້ວງກວາງຊີ, ຢ້ຽມຢາມໂຄງການຊ່ວຍເຫຼືອຫຼຸດຜ່ອນຄວາມທຸກຍາກ ທີ່ແຂວງກວາງຊີເປັນຝ່າຍຈັດຕັ້ງປະຕິບັດທີ່ບ້ານຊຽງລ້ອມ ນະຄອນຫຼວງພະບາງ ແຂວງຫຼວງພະບາງ. ພ້ອມນັ້ນ, ຍັງໄດ້ຢ້ຽມຢາມສະຖານທີ່ທ່ອງທ່ຽວສຳຄັນຕ່າງໆຈຳນວນໜຶ່ງຂອງນະຄອນຫຼວງວຽງຈັນ.

**(ນາງ ປາກາລັກ ພົມມີໄຊ)**

## ກຳປູເຈຍ-...

(ຕໍ່ຈາກໜ້າ 1)

(CLV) ໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ແລະ ກວມລວມ ໃນນີ້ຝ່າຍລາວ ກໍໄດ້ສະເໜີແລກປ່ຽນບາງບັນຫາ ກ່ຽວກັບສະພາແຫ່ງຊາດຂອງ 3 ປະເທດ ແລະ ຂະແໜງການກ່ຽວຂ້ອງ ເພື່ອໃຫ້ວຽກງານດັ່ງກ່າວຢູ່ສາມຫຼ່ຽມພັດທະນາ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນດີຂຶ້ນ.

ກອງປະຊຸມດັ່ງກ່າວ, ເປັນຫົວຂໍ້ກອງປະຊຸມຍ່ອຍທີ 2 ຈາກຫົວຂໍ້ຫຼັກຂອງກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 1 ໂດຍການເປັນປະທານຮ່ວມຂອງ ທ່ານ ຊຽງ ວອນ ປະທານກຳມາທິການການເສດຖະກິດ, ການເງິນ, ການທະນາຄານ ແລະ ການກວດສອບ ສະພາແຫ່ງຊາດ ແຫ່ງ ລາຊະອານາຈັກກຳປູເຈຍ, ທ່ານ ຫວູ ຮອງ ແທັງ ປະທານກຳມາທິການເສດຖະກິດ ສະພາແຫ່ງຊາດ ສສ. ຫວຽດນາມ, ທ່ານ ລິນຄຳ ດວງສະຫວັນ ກຳມະການຄະນະປະຈຳ ປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດແຫ່ງ ສປປ ລາວ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ ປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ຕາງໜ້າຝ່າຍລາວມີຄຳເຫັນ ເຊິ່ງໄດ້ໃຫ້ຮູ້ວ່າ: ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດໃນໄລຍະຜ່ານມາ ວຽກງານເສດຖະກິດ, ວັດທະນະທຳ-ສັງຄົມຢູ່ສາມຫຼ່ຽມພັດທະນາ ກໍຍັງມີຂໍ້ຫຍຸ້ງຍາກຈຳນວນໜຶ່ງ ທີ່ຈະໄດ້ສືບຕໍ່ຮ່ວມກັນປັບປຸງແກ້ໄຂ ເປັນຕົ້ນ: 1) ຂອດການປະສານງານ ລະຫວ່າງ ລັດຖະບານ 3 ປະເທດ ແລະ ສະພາແຫ່ງຊາດ, ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນໂລ່ງລ່ຽນ, ລະບຽບການ ແລະ ນິຕິກຳ ໃນການຄຸ້ມຄອງການເຂົ້າ-ອອກ ຂອງປະຊາຊົນ, ພາຫະນະ ແລະ ສິນຄ້າຜ່ານແດນຍັງບໍ່ສອດຄ່ອງ ແລະ ກົມກຽວກັນ; 2) ແຫຼ່ງທຶນ ໃນການລົງທຶນ ແລະ ການພັດທະນາໃນເຂດສາມຫຼ່ຽມພັດທະນາ ຍັງມີຈຳກັດ; 3) ພື້ນຖານໂຄງລ່າງຍັງບໍ່ທັນເອື້ອອຳນວຍຄວາມສະດວກດີເທົ່າທີ່ຄວນ. ສິ່ງທີ່ກ່າວມານັ້ນ, ຍັງເປັນອຸປະສັກເຮັດໃຫ້ການຈັດຕັ້ງຜັນຂະຫຍາຍແຜນການຮ່ວມມືໃນເຂດສາມຫຼ່ຽມພັດທະນາ ຍັງບໍ່ທັນໄດ້ຮັບໝາກຜົນດີເທົ່າທີ່ຄວນ ແລະ ການຄ້າຊາຍແດນຂອງບັນດາແຂວງ ໃນເຂດສາມຫຼ່ຽມພັດທະນາ ຍັງບໍ່ທັນໄດ້ຮັບການສົ່ງເສີມເທົ່າທີ່ຄວນ.

ເພື່ອເປັນການສ້າງພື້ນຖານ ແລະ ເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານ

ໃນຂົງເຂດເສດຖະກິດ ແລະ ວັດທະນະທຳ-ສັງຄົມ ຢູ່ເຂດສາມຫຼ່ຽມພັດທະນາ ກຳປູເຈຍ-ລາວ-ຫວຽດນາມ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນດີຂຶ້ນນັ້ນ, ຝ່າຍລາວ ກໍໄດ້ສະເໜີແລກປ່ຽນບາງບັນຫາ ດັ່ງນີ້:

ສະພາແຫ່ງຊາດຂອງສາມປະເທດ ພວກເຮົາ ຈະຕ້ອງໄດ້ເອົາໃຈໃສ່ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ບັນດາຂໍ້ລິເລີ່ມດ້ານການພັດທະນາ ທີ່ລັດຖະບານທັງສາມປະເທດໄດ້ລົງນາມຮ່ວມກັນຢ່າງແຂງແຮງ; ຮ່ວມກັນເກັບກຳບັນຫາ, ຂໍ້ຫຍຸ້ງຍາກ ແລະ ຄຳສະເໜີ ຂອງປະຊາຊົນ ເພື່ອນຳສະເໜີຕໍ່ລັດຖະບານຂອງສາມປະເທດ ນຳໄປຄົ້ນຄວ້າພິຈາລະນາແກ້ໄຂ ແລະ ຈັດຕັ້ງປະຕິບັດ; ສົ່ງເສີມ, ສ້າງກິດຈະກຳຮ່ວມກັນ ເປັນຕົ້ນການແລກປ່ຽນຂໍ້ມູນ-ຂ່າວສານ, ການຈັດຕະຫຼາດວາງສະແດງສິນຄ້າ, ແລກປ່ຽນກິດຈະກຳທາງດ້ານສິລະປະ, ກິລາ ແລະ ອື່ນໆ ເພື່ອຮັດແໜ້ນສາຍພົວພັນຮ່ວມມື, ຄວາມສາມັກຄີຮັກແພງ ທີ່ມີມູນເຊື້ອ ລະຫວ່າງປະຊາຊົນດ້ວຍກັນ ໂດຍສະເພາະຄົນຮຸ່ນໜຸ່ມຢູ່ໃນເຂດສາມຫຼ່ຽມພັດທະນາ; ຊຸກຍູ້ໃຫ້ມີການສົ່ງເສີມ ແລະ ການແລກປ່ຽນຄວາມຮູ້, ປະສົບການ, ເຕັກນິກວິຊາການ, ຊ່ຽວຊານສະເພາະດ້ານ, ການສຶກສາ ແລະ ການເຝິກອົບຮົມເຕັກນິກວິຊາຊີບ, ວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໃນຂົງເຂດທີ່ກ່ຽວຂ້ອງລະຫວ່າງແຂວງ ໃນເຂດສາມຫຼ່ຽມພັດທະນາ.

ພ້ອມນີ້, ໄດ້ສະເໜີໃຫ້ຂະແໜງການກ່ຽວຂ້ອງຂອງລັດຖະບານສາມປະເທດ ສືບຕໍ່ເພີ່ມທະວີການຊຸກຍູ້, ສົ່ງເສີມ ແລະ ດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າມາລົງທຶນ ໃນເຂດສາມຫຼ່ຽມພັດທະນາ ເພື່ອເປັນການຂະຫຍາຍການຜະລິດ ແລະ ການບໍລິການ, ສົ່ງເສີມເສດຖະກິດ, ການຄ້າ-ການລົງທຶນ, ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ ແລະ ຂະແໜງການອື່ນໆທີ່ມີທ່າແຮງຮ່ວມກັນ, ພ້ອມດຽວກັນນັ້ນ ກໍໃຫ້ເຊື່ອມສານເປົ້າໝາຍຂອງແຜນແມ່ບົດແລະແຜນປະຕິບັດງານເຂດສາມຫຼ່ຽມພັດທະນາເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ຈັດສັນງົບປະມານຂອງລັດເຂົ້າໃນການພັດທະນາເຂດດັ່ງກ່າວ; ພັດທະນາໂຄງລ່າງພື້ນຖານ, ການຄົມມະນາຄົມ, ຕະຫຼາດຊຸມຊົນ ແລະ ການສະໜັບສະໜູນສິ່ງອຳນວຍຄວາມສະດວກອື່ນໆ ຕາມບໍລິເວນຊາຍແດນຂອງສາມປະເທດ ເປັນຕົ້ນການປັບປຸງ ແລະ ຍົກລະດັບດ່ານສາກົນ ເພື່ອອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າຜ່ານແດນ ແລະ ການໄປມາຫາສູ່ຂອງປະຊາຊົນ; ຊຸກຍູ້ການປົກປັກຮັກສາ ຊັບພະຍາກອນທຳມະຊາດ, ລະບົບນິເວດທຳມະຊາດ ແລະ ຊີວະນາໆພັນທາງທຳມະຊາດ ພ້ອມທັງຊຸກຍູ້ການພັດທະນາ, ນຳໃຊ້ແບບຍືນຍົງ ແລະ ຮັບປະກັນປະສິດທິຜົນສູງສຸດ ພາຍໃນແຂວງ ຂອງເຂດສາມຫຼ່ຽມພັດທະນາ.

# ເຜີຍແຜ່ມູນເຊື້ອ ແລະ ຄວາມໝາຍສຳຄັນຂອງວັນຊາດ ທີ 2 ທັນວາ

(ສພຊ) ເພື່ອເປັນການທົບທວນຄືນມູນເຊື້ອວັນຊາດ ທີ 2 ທັນວາ ຄົບຮອບ 48 ປີ ໃຫ້ສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງອຸດົມໄຊ ໃຫ້ຮັບຮູ້ເຂົ້າໃຈກ່ຽວກັບປະຫວັດສາດ, ມູນເຊື້ອຂອງບັນດາຜູ້ນຳແນວລາວຮັກຊາດ, ນັກຮົບ ແລະ ປະຊາຊົນລາວບັນດາເຜົ່າ ທີ່ອຸທິດເລືອດເນື້ອເຫື່ອແຮງເພື່ອປະເທດຊາດ, ເພື່ອການປະຕິວັດປົດປ່ອຍຊາດ ແລະເພື່ອເປັນການຮ່ຳຮຽນເອົາຄຸນສົມບັດ, ສິນທຳປະຕິວັດ, ຄຸນງາມຄວາມດີຂອງຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ ທີ່ອຸດທິດຕົນເພື່ອການປະຕິວັດ ແລະ ນຳພາປວງຊົນລາວທັງຊາດ ຍາດໄດ້ເອກະລາດມາໃຫ້ແກ່ປະເທດຊາດ. ທັງເປັນການປຸກລະດົມປະຊາຊົນລາວບັນດາເຜົ່າ, ເປັນຕົ້ນຄົນຮຸ່ນໜຸ່ມໃຫ້ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບມູນເຊື້ອຄວາມເປັນມາ ແລະ ຄວາມຫມາຍສຳຄັນໃຫ້ກວ້າງຂວາງເລິກເຊິ່ງ, ປຸກລະດົມເສີມຂະຫຍາຍມູນເຊື້ອເຂົ້າໃນຂະບວນການເຄື່ອນໄຫວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ການປະຕິບັດ 2 ວາລະແຫ່ງຊາດໃຫ້ປະກົດເປັນຈິງ. ຮັກສາ ແລະ ເສີມຂະຫຍາຍມູນເຊື້ອຮັກຊາດ,



ມູນເຊື້ອແຫ່ງຄວາມສາມັກຄີປອງດອງ, ມູນເຊື້ອແຫ່ງການສູ້ຮົບອາດຫານຂອງປວງຊົນລາວທັງຊາດ ພາຍໃຕ້ການນຳພາຂອງພັກ ແນໃສ່ສ້າງໃຫ້ສະມາຊິກພັກ, ພະນັກງານມີທັດສະນະທີ່ຖືກຕ້ອງເປັນເອກະພາບພາຍໃນພັກ, ພາຍໃນສັງຄົມ ພ້ອມທັງຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ.

ເມື່ອບໍ່ດົນມານີ້, ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ, ໄດ້ຈັດຕັ້ງເຜີຍແຜ່ເອກະສານມູນເຊື້ອວັນຊາດທີ 2 ທັນວາ ຄົບຮອບ 48 ປີ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ມີທ່ານ ຄຳເຜີຍ ງອນວັນຄຳ ກຳມະການປະຈຳພັກແຂວງ ຮອງປະທານ, ທ່ານ ທອງຄານ ວັດສະດາກອນ ເລຂາໜ່ວຍພັກ, ບັນດາຄະນະພັກ, ສະມາຊິກພັກສົມບູນ ແລະ ສຳຮອງ ພາຍໃນໜ່ວຍພັກ ສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ບັນດາເອກະສານທີ່ນຳມາເຜີຍແຜ່ປະກອບມີ: ເອກະສານໂຄສະນາ-ປະຖະກະຖາ 48 ປີ ແຫ່ງການພັດທະນາປະເທດຊາດ ພາຍໃຕ້ການນຳພາຂອງພັກ (2 ທັນວາ 1975-2 ທັນວາ 2023); ມູນເຊື້ອກອງທັບປະຊາຊົນລາວ 75 ປີ ໃຕ້ການນຳພາເດັດຂາດໂດຍກົງ ແລະ ຮອບດ້ານຂອງພັກປະຊາຊົນປະຕິວັດລາວ; ເອກະສານລະນຶກວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 103 ປີ (13 ທັນວາ 1920-13 ທັນວາ 2023) ແລະ ວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ (8 ກຸມພາ 1924-8 ກຸມພາ 2023) ແລະ ເອກະສານສະພາບລວມບັນຫາພົ້ນເດັ່ນຂອງພາກພື້ນ ແລະ ຂອງໂລກ.

ການເຜີຍແຜ່ເອກະສານໃນຄັ້ງນີ້, ໄດ້ເນັ້ນໜັກໃຫ້ສືບຕໍ່ເສີມຂະຫຍາຍມູນເຊື້ອວັນຊາດ ທີ 2 ທັນວາ ເຂົ້າໃນການພັດທະນາປະເທດຊາດ: ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ນຳພາ-ຊີ້ນຳການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກຄືມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນເຂົ້າສູ່ຊີວິດຕົວຈິງ, ໂດຍສະເພາະການຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI ໃຫ້ມີຜົນສຳເລັດຕາມຄາດໝາຍ; ສືບຕໍ່ນຳພາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສະເພາະແມ່ນການສືບຕໍ່ຈັດຕັ້ງປະຕິບັດ 6 ວຽກງານໃຫ້ປາກົດຜົນເປັນຈິງ, ພັດທະນາເສດຖະກິດແຫ່ງຊາດ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ, ສ້າງຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດເຕັກໂນໂລຢີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມໃນການຜະລິດ ແລະ ການບໍລິການ, ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ, ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ; ສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ ສາມາດນຳໃຊ້ທ່າແຮງ, ກາລະໂອກາດ, ທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມ, ການເຊື່ອມໂຍງ ກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ; ຄຸ້ມຄອງ-ບໍລິການລັດໃຫ້ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ; ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າເຊີດຊູນ້ຳໃຈຮັກຊາດ, ເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສ້າງປະເທດຊາດໃຫ້ມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ; ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ຕໍ່ການໂຄສະນາ, ປຸກລະດົມໃຫ້ທົ່ວສັງຄົມຍົກສູງສະຕິລະວັງຕົວຕໍ່ກົນອຸບາຍຂອງພວກຄົນບໍ່ດີ ທີ່ສວຍໃຊ້ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ ເພື່ອມ້າງເພຄວາມສາມັກຄີພາຍໃນປະເທດເຮົາ ຮັບປະກັນການປົກປັກຮັກສາ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນສັງຄົມໃຫ້ໜັກແໜ້ນຍິ່ງໆຂຶ້ນ; ສືບຕໍ່ຈັດຕັ້ງປະຕິບັດຢ່າງແຂງແຮງ ຕໍ່ບັນດາຄາດໝາຍສູ້ຊົນໃນທ້າຍສະໄໝທີ່ກອງປະຊຸມໃຫຍ່ອົງຄະນະພັກແຕ່ລະຂັ້ນວາງອອກ ໂດຍຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ສຳເລັດຜົນ.

**ຄຳຂວັນໂຄສະນາ-ປຸກລະດົມ:**

- ຊົມເຊີຍວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 48 ປີ ຢ່າງສຸດໃຈ!
- ນ້ຳໃຈວັນຊາດ ທີ 2 ທັນວາ ໝັ້ນຍືນ!
- ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໝັ້ນຍືນ!



# ສພຂ ຄຳມ່ວນ ເຊື່ອມຊຶມ ແລະ ຜັນຂະຫຍາຍເອກະສານສຳຄັນຂອງພັກ

(ສພຊ) ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດພິທີເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກເມື່ອວັນທີ 5 ທັນວາ 2023 ຢູ່ທີ່ສຳນັກງານສະພາປະຊາຊົນແຂວງຄຳມ່ວນ ໂດຍການເປັນປະທານຂອງສະຫາຍນາງ ບັງອອນ ໄຊຍະສິດ ກຳມະການປະຈຳພັກແຂວງ ຮອງປະທານ ສພຂ ຄຳມ່ວນ; ມີສະຫາຍ ບົວພັນ ແສງຈັນ ກຳມະການພັກແຂວງ, ຮອງປະທານ ສພຂ, ມີບັນດາສະຫາຍຄະນະພັກ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ສພຂ ຄຳມ່ວນເຂົ້າຮ່ວມ.

ໃນພິທີ, ສະຫາຍ ນາງ ບັງອອນ ໄຊຍະສິດ ກ່າວເປີດກອງປະຊຸມ ພ້ອມທັງນຳພາດຳເນີນກອງປະຊຸມ. ຈາກນັ້ນ, ບັນດາສະຫາຍຄະນະນຳຂອງ ສພຂ ຄຳມ່ວນ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜັນຂະຫຍາຍເອກະ



ສານກ່ຽວກັບຄຳແນະນຳການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫ່ຍ 3 ຂັ້ນຂອງພັກ ສະບັບເລກທີ 221/ຄຈສພ, ລົງວັນທີ 16 ສິງຫາ 2023, ຄຳສັ່ງວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023, ຄຳແນະນຳການກະກຽມ ແລະ ດຳເນີນຊີວິດການເມືອງທ້າຍສະໄໝກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 285/ຄກສພ, ລົງວັນທີ 15 ກັນຍາ 2023, ປຶດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຂວງ ສະໄໝທີ X, ຜ່ານບົດສະຫຼຸບຕີລາຄາແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ X ຂອງແຂວງ (ໄລຍະກາງສະໄໝ), ມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຂວງ, ມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ, ຄຳສັ່ງແນະນຳຂອງຄະນະປະຈຳພັກແຂວງ ສະບັບເລກທີ 12/ຄປຈ.ຄມ, ລົງວັນທີ 31 ຕຸລາ 2023 ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຂວງ, ຄຳແນະນຳກ່ຽວກັບການຈັດຕັ້ງດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ, ຄະນະພັກກອງບັນຊາການທະຫານແຂວງ, ຄະນະພັກກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານໃນທົ່ວແຂວງຄຳມ່ວນ ສະບັບເລກທີ 14/ຄປຈ.ຄມ, ລົງວັນທີ 31 ຕຸລາ 2023 ແລະ ບົດໂອ້ລົມຂອງສະຫາຍ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ຕໍ່ກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2022.

ຕອນທ້າຍກອງປະຊຸມ, ສະຫາຍ ນາງ ບັງອອນ ໄຊຍະສິດ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍສະຫາຍໄດ້ເນັ້ນໃຫ້ພະນັກງານ, ສະມະຊິກພັກ ໃຫ້ເປັນເຈົ້າການຄົ້ນຄວ້າເຊື່ອມຊຶມກຳແໜ້ນ ແລະ ຜັນຂະຫຍາຍຜົນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະໄໝ XI ແລະ ຜົນຂອງກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ສະໄໝ X ເພື່ອໃຫ້ມີຜົນສຳເລັດຕາມຄາດໝາຍ, ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ, ພ້ອມກັນຕັ້ງໜ້າເສີມຂະຫຍາຍ ແລະ ປັບປຸງແກ້ໄຂບັນຫາຄົງຄ້າງວຽກງານທີ່ຮັບຜິດຊອບ, ພ້ອມກັນສຸມໃສ່ການກະກຽມກອງປະຊຸມສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ແລະ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງໜ່ວຍພັກຮາກຖານສະພາປະຊາຊົນແຂວງຄຳມ່ວນໃຫ້ມີຜົນສຳເລັດຕາມຄາດໝາຍ.

**(ເອື້ອ ມະໂນສີງ)**

# ບົດສຳພາດປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ



ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດຊຸດທີ IX ທ່ານ ຈອມສີ ລັດຕະນະປັນ ໃນນາມປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ໄດ້ໃຫ້ສຳພາດຕໍ່ກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ກ່ຽວກັບບາງບັນຫາທີ່ປະຊາຊົນໃຫ້ຄວາມສົນໃຈ ໂດຍສະເພາະແມ່ນບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງ ເຊິ່ງທ່ານໃຫ້ຮູ້ວ່າ: ກ່ຽວກັບບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງບໍ່ແກ້ວ ທີ່ໄດ້ມີຄວາມຮັບຜິດຊອບຈັດຕັ້ງ ແລະ ເຄື່ອນໄຫວ, ອັນພື້ນຖານແມ່ນເຮົາໄດ້ເອົາໃຈໃສ່ຍົກສູງປະສິດທິພາບໃນການຈັດຕັ້ງພາລະບົບບາດ, ສິດ ແລະ ໜ້າທີ່ໃຫ້ສູງຂຶ້ນ ໂດຍສະເພາະແມ່ນການປັບປຸງບັນດາພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະກົງຈັກການຈັດຕັ້ງພາຍໃນສະພາປະຊາຊົນແຂວງ ໃຫ້ຄົບຖ້ວນ, ຈະແຈ້ງ, ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ກໍຄືສະພາບຕົວຈິງຂອງທ້ອງຖິ່ນ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານສະພາປະຊາຊົນແຂວງໃນ 3 ພາລະບົດບາດ ເປັນຕົ້ນການສ້າງ ແລະ ປັບປຸງນິຕິກຳ: ໄດ້ພິຈາລະນາ, ຮັບຮອງຂໍ້ຕົກລົງຂອງເຈົ້າແຂວງ ເຊິ່ງແມ່ນນິຕິກຳໃຕ້ກົດໝາຍ ໄດ້ 4 ສະບັບ. ນອກຈາກນັ້ນ, ໄດ້ຈັດຕັ້ງການທາບທາມກົດໝາຍ ເພື່ອປັບປຸງ ແລະ ສ້າງໃໝ່ 8 ສະບັບ; ການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໄດ້ຄົ້ນຄວ້າ, ຮັບຮອງເອົາບັນຫາສຳຄັນຂອງແຂວງຈຳນວນໜຶ່ງ; ການຕິດຕາມກວດກາ: ຊຸກຍູ້ຂະບວນການທຳການຜະລິດຢູ່ພາຍໃນແຂວງ ເພື່ອທົດແທນການນຳເຂົ້າຈາກຕ່າງປະເທດໃຫ້ໜ້ອຍລົງ, ການຕິດຕາມການແກ້ໄຂບັນຫາການຄ້າຂາຍເຖື່ອນ. ລັກລອບໜີພາສີຈາກການນຳເຂົ້າ, ການຄຸ້ມຄອງນຳໃຊ້ເງິນຕາຕ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບຕິດພັນກັບການສ້າງສະຕິກຳໃຕ້ກົດໝາຍ, ການປະກອບສ່ວນຂອງສັງຄົມດ້ານຕ່າງໆໃຫ້ສູງຂຶ້ນ; ຕິດຕາມການຕ້ານການຟຸມເຟືອຍ ທີ່ຍັງບໍ່ທັນເຮັດໄດ້ດີ ແລະ ເດັດຂາດ ບັນຫາລະບົບພື້ນຖານໂຄງລ່າງເສັ້ນທາງຄົມມະນາຄົມ-ຂົນສົ່ງ ຈາກແຂວງຫາເມືອງ ແລະ ຈາກເມືອງຫາບ້ານ ຍັງບໍ່ທັນສະດວກໃນການໄປມາຫາສູ່ ທີ່ຈະເປັນເງື່ອນໄຂເອື້ອອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ-ໂດຍສານ, ການທ່ອງທ່ຽວ, ດຶງດູດການຄ້າ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ; ບັນຫາການຈັດສັນພູມລຳເນົາ, ຈັດສັນອາຊີບ, ການພັດທະນາສີມືແຮງງານພາຍໃນ ຍັງເຮັດແບບລວມໆ ບໍ່ມີຈຸດສຸມ ບັນຫາເຫຼົ່ານີ້ແມ່ນສົ່ງຜົນກະທົບຕໍ່ການດຳລົງຊີວິດປະຈຳວັນຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ເປັນຕົ້ນ: ຄ່າຄອງຊີບ, ຄ່າໄຟຟ້າ, ຄ່ານ້ຳປະປາ, ນ້ຳມັນເຊື້ອໄຟ ຖີບຕົວສູງຂຶ້ນ ແຕ່ຄ່າເງິນກີບພັດອ່ອນຄ່າລົງ ຈຶ່ງຂໍຮຽກຮ້ອງໃຫ້ອົງການຈັດຕັ້ງພັກ-ລັດ ແຕ່ລະຂັ້ນຕ້ອງໄດ້ຮີບຮ້ອນຊອກວິທີການແກ້ໄຂຢ່າງເປັນລະບົບ ແລະ ທັນເວລາ.

ໂອກາດນີ້, ທ່ານ ຈອມສີ ລັດຕະນະປັນ ຍັງໃຫ້ຮູ້ກ່ຽວກັບການປະຕິບັດພາລະບົດບາດຕິດຕາມກວດກາ 2 ວາລະແຫ່ງຊາດວ່າ: ໃນນາມທີ່ເປັນຕົວແທນຂອງປະຊາຊົນບັນດາເຜົ່າຢູ່ແຂວງບໍ່ແກ້ວ ໄດ້ປະຕິບັດພາລະບົດບາດຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງອົງການລັດຢູ່ຂັ້ນທ້ອງຖິ່ນ, ເປັນປົກກະຕິ, ຕໍ່ເນື່ອງ ອັນພົ້ນເດັ່ນ: ໄດ້ລົງຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ 3 ເມືອງ ຄື: ເມືອງຕົ້ນເຜີ້ງ, ເມືອງເມິງ ແລະ ເມືອງຜາອຸດົມ ໄດ້ຮັບຟັງການລາຍງານ ແລະ ລົງຕິດຕາມຜົນການຈັດຕັ້ງປະຕິບັດຢູ່ພື້ນທີ່ຕົວຈິງ ຢູ່ 3 ເມືອງດັ່ງກ່າວ ເຫັນວ່າມີຄວາມຄືບໜ້າກວ່າໄລຍະທີ່ບໍ່ທັນມີວາລະແຫ່ງຊາດ. ນອກນັ້ນ, ຍັງໄດ້ຕິດຕາມກວດກາຕາມບົດສະຫຼຸບຂອງພະແນກການ, ອົງການຕ່າງໆຢູ່ຂັ້ນແຂວງ ໄດ້ທັງໝົດ 16 ສະບັບ, ລົງຕິດຕາມກວດກາຕາມແຈ້ງການເຊີນຂອງສະພາແຫ່ງຊາດ 1 ສະບັບ; ຕິດຕາມພາກສ່ວນທີ່ກ່ຽວຂ້ອງມາລາຍງານຕໍ່ກອງປະຊຸມສະພາປະຊາຊົນແຂວງ 2 ສະບັບ, ຕິດພັນກັບການລົງໂຄສະນາຜົນຮ້າຍຂອງຢາເສບຕິດຢູ່ບັນດາບ້ານໃນໄລຍະລົງຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ສຸດທີ II ໄດ້ທັງໝົດ 108 ຈຸດທົ່ວແຂວງ.

ຄຽງຄູ່ກັບຜົນສຳເລັດ ກໍຍັງມີຂໍ້ຫຍຸ້ງຍາກ ເປັນຕົ້ນ: ການເຄື່ອນໄຫວໂຄສະນາເຜີຍແຜ່ບັນດານິຕິກຳ ຕິດພັນກັບບັນຫາຢາເສບຕິດ ຍັງເຮັດບໍ່ທັນໄດ້ຢ່າງກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ ຍ້ອນງົບປະມານ, ອຸປະກອນຮັບໃຊ້ ຍັງມີຈຳກັດ; ຄວາມຮັບຮູ້ເຂົ້າໃຈຄວາມຕື່ນຕົວຂອງປະຊາຊົນບັນດາເຜົ່າຍັງບໍ່ທັນສູງ ຈຶ່ງເຮັດໃຫ້ກຸ່ມແກ້ງຄ້າຂາຍຢາເສບຕິດ, ສວຍໃຊ້ກາລະໂອກາດເຄື່ອນຍ້າຍ, ຄ້າຂາຍ, ຂົນສົ່ງ ແລະ ຈຳນວນຜູ້ເສບຍັງບໍ່ທັນມີຕົວເລກຫຼຸດລົງ; ການຜະລິດເປັນສິນຄ້າສົ່ງອອກຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ເຮັດແບບຄອບຄົວ ເພື່ອຂາຍພາຍໃນຫຼາຍກວ່າທີ່ຂາຍສົ່ງອອກຕ່າງປະເທດ, ການຄຸ້ມຄອງນຳໃຊ້ເງິນຕາຕ່າງປະເທດ, ການແລກປ່ຽນເງິນຕາ ແລະ ການສົ່ງເສີມການນຳໃຊ້ເງິນກີບ ແມ່ນຍັງບໍ່ມີຂໍ້ກຳນົດທີ່ຮັດກຸມ ແລະ ພາກສ່ວນທີ່ກ່ຽວຂ້ອງບໍ່ທັນມີມາດຕະຖານທີ່ສາມາດສະກັດກັ້ນໃຫ້ເປັນໄປຕາມອັດຕາແລກປ່ຽນຕົວຈິງ ອັນເນື່ອງມາຈາກສິນຄ້ານຳເຂົ້າ, ອຸປະໂພກ-ບໍລິໂພກ ແລະ ນ້ຳມັນເຊື້ອໄຟ ແມ່ນນຳເຂົ້າຈາກຕ່າງປະເທດ ເປັນສ່ວນຫຼາຍ.

# ເຊື່ອມຊຶມ ແລະ ຜັນຂະຫຍາຍເອກະສານສຳຄັນຕ່າງໆ ຂອງຊາດ-ຂອງພັກ



(ສພຊ) ເພື່ອຜັນຂະຫຍາຍບັນດາມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XI ໃນ ວັນທີ 5 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ກົງແກ້ວ ມີອໍລະຈັກ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານປະທານໃນຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃນຄັ້ງນີ້ ທ່ານ ກົງແກ້ວ ມີອໍລະຈັກ ໄດ້ຍົກໃຫ້ເຫັນເນື້ອໃນຈິດໃຈທິດຊີ້ນຳ ຕໍ່ບັນຫາສຳຄັນຂອງພັກ, ຂອງປະເທດຊາດ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຕິພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ເຊິ່ງເຫັນໄດ້ກ່ຽວກັບຕົວເລກມະຫາພາກຕ່າງໆ ສາມາດບັນລຸໄດ້ຄາດໝາຍເປັນສ່ວນຫຼາຍ, ຄາດຄະເນໝົດປີ 2023 GDP ຈະຂະຫຍາຍຕົວໃນລະດັບ 4,2%; ການຈັດເກັບລາຍຮັບງົບປະມານບັນລຸຕາມແຜນທີ່ສະພາແຫ່ງຊາດຮັບຮອງ, ອັດຕາແລກປ່ຽນເງິນເຟີ້ຍັງສູງແຕ່ກໍ່ມີທ່າອ່ຽງຫຼຸດລົງ ຈາກ 41,26% ໃນເດືອນກຸມພາ ຫຼຸດລົງມາຢູ່ທີ່ 25,69% ໃນເດືອນກັນຍາ 2023, ການຊໍາລະໜີ້ສິນຕ່າງປະເທດ ປະຕິບັດໄດ້ຕາມແຜນ, ເຖິງຢ່າງໃດກໍຕາມ ເຫັນວ່າຜົນໄດ້ຮັບນັ້ນຫຼາຍດ້ານຍັງບໍ່ທັນໜັກແໜ້ນ ແລະ ໝັ້ນຄົງ, ບັນຫາເຄັ່ງຮ້ອນຕ່າງໆ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ ແລະ ບໍ່ບັນລຸຕາມແຜນການວາງໄວ້ ເປັນຕົ້ນ ອັດຕາເງິນເຟີ້, ການບໍລິຫານຈັດການປະລິມານເງິນ, ອັດຕາແລກປ່ຽນເງິນຕາຕ່າງປະເທດ, ລາຄາສິນຄ້າ, ການຂາດດຸນຊຳລະ, ຂາດດຸນງົບປະມານ ແລະ ອື່ນໆ, ກອງປະຊຸມຍັງໄດ້ຊີ້ໃຫ້ເຫັນສາເຫດຕົ້ນຕໍ ທັງປັດໄຈໃນຕົວ ແລະ ນອກຕົວຂອງການແກ້ໄຂສະພາບຄວາມຫຍຸ້ງຍາກຜ່ານມາ, ແຕ່ອັນທີ່ເປັນພື້ນຖານຍັງແມ່ນການນຳພາ-ຊີ້ນຳແກ້ໄຂບັນຫາ ຍັງບໍ່ທັນເດັດຊາດ, ເຂັ້ມງວດ ແລະ ແທດກັບສະພາບບັນຫາຕົວຈິງ, ບັນຫາຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງບາງຂະແໜງການ ແລະ ທ້ອງຖິ່ນບໍ່ທັນສູງ, ລະບຽບແບບແຜນການຄຸ້ມຄອງ-ບໍລິຫານລັດຕາມກົດໝາຍບໍ່ທັນເຂັ້ມງວດ, ຂາດກົນໄກປະສານງານທີ່ກົມກຽວ ແລະ ການເຮັດແທ້ທຳຈິງ.

ຕໍ່ຈາກນັ້ນ, ກອງປະຊຸມກໍໄດ້ຮັບຟັງການປາຖະກະຖາວັນມະຫາປະຕິວັດເດືອນຕຸລາ ລັດເຊຍ ຄົບຮອບ 206 ປີ (7/11/1917-7/11/2023); ວັນເກີດທ່ານ ຟ.ອັງແກນ ຄົບຮອບ 203 ປີ (28/11/1820-28/11/2023); ສານອວຍພອນຂອງພະນະທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເນື່ອງໃນໂອກາດລະນຶກວັນສາກົນເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ 2023 ຈາກທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ, ພາຍຫຼັງທີ່ໄດ້ຮັບຟັງການປາຖະກະຖາສຳເລັດແລ້ວ ໂດຍປະຕິບັດຕາມວາລະກອງປະຊຸມ ເພື່ອກະກຽມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II, ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານບັນດາມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຄະນະຊີ້ນຳ, ບັນດາອະນຸກຳມະການຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມ, ຜ່ານແຜນກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II; ພ້ອມນີ້ມ ຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຮອງເລຂາທິການສະພາປະຊາຊົນແຂວງ ໂດຍແຕ່ງຕັ້ງທ່ານ ຄຳໝື່ນ ຂັນທະວົງ ເປັນຮອງເລຂາທິການ, ພ້ອມທັງຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການປັບປຸງ ແລະ ການບັນຈຸສັບຊ້ອນບຸກຄະລາກອນ ຂັ້ນຂະແໜງພາຍໃນສະພາປະຊາຊົນແຂວງ.

ຕອນທ້າຍ, ປະທານກອງປະຊຸມ ໄດ້ສະຫຼຸບ, ຕີລາຄາ ພ້ອມທັງຍ້ອງຍໍຊົມເຊີຍຜົນສຳເລັດທີ່ທຸກພາກສ່ວນພາຍໃນສະພາປະຊາຊົນແຂວງ ໄດ້ຮ່ວມແຮງຮ່ວມໃຈສາມັກຄີໃນການຈັດຕັ້ງປະຕິບັດວຽກງານ ສຳເລັດຕາມແຜນທີ່ວາງໄວ້ ແລະ ມີທິດຊີ້ນຳ ໃຫ້ແຕ່ລະຄະນະກຳມະການກະກຽມບັນດາເນື້ອໃນເພື່ອປະກອບຄຳຄິດເຫັນໃສ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ທັນກັບວັນເວລາທີ່ໄດ້ກຳນົດໄວ້.



# ສສຊ ສະເໜີໃຫ້ລັດຖະບານເລັ່ງລັດການປະຕິຮູບ 5 ຫົວໜ່ວຍລັດວິສາຫະກິດ ຍຸດທະສາດເຄິ່ງຮ້ອນ

ທ່ານ ສຈ. ປອ. ມາຍ ຟອງ ມາຍຊາຍ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ໂດຍລັດຖະບານໄດ້ນຳມາລາຍງານຢູ່ວາລະທຳອິດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ຜ່ານມາ ກ່ຽວຂ້ອງກັບການປະຕິຮູບລັດວິສະຫະກິດ ທ່ານມີຄຳເຫັນວ່າ ປັດຈຸບັນ ລັດຖະບານກໍມີຄວາມພະຍາມໃນການປະຕິຮູບຫຼາຍລັດວິສະຫະກິດ ເພື່ອເຮັດໃຫ້ມີການດຳເນີນໄປຢ່າງມີປະສິດທິພາບ ປະສິດທິຜົນ, ຫຼຸດຜ່ອນບັນຫາພາລະໜີ້ສິນຕ່າງໆ ແຕ່ວ່າໃນແຜນທີ່ເພິ່ນກຳນົດການປະຕິຮູບຂອງປີ 2021-2025 ນັ້ນ ເບື້ອງຕົ້ນ ເຫັນວ່າ ກຳນົດເອົາໄວ້ 31 ຫົວໜ່ວຍທີ່ຈະຕ້ອງມີການປະຕິຮູບ ໃນນັ້ນ, ຈະມີລັດວິສະຫະກິດທີ່ເປັນຍຸດທະສາດ ໝາຍຄວາມວ່າ ລັດຈະຕ້ອງຖືຮຸ້ນ 100% ຫຼືວ່າຖືໃນອັດຕາທີ່ສູງເຖິງ 19 ຫົວໜ່ວຍ ແຕ່ມາຮອດປັດຈຸບັນນີ້ເປັນປີທີ 3 ການປະຕິຮູບໄດ້ດຳເນີນສຳເລັດພຽງແຕ່ 1 ຫົວໜ່ວຍ ນັ້ນກໍຄືລັດວິສະຫະກິດບໍລິການການຄ້າຜ່ານແດນ ໂດຍລັດຖະບານຖືຮຸ້ນໄວ້ 51% ແລະ ອີກ 18 ຫົວໜ່ວຍ ກຳລັງດຳເນີນການປະຕິຮູບ ແລະ ໃນ 18 ຫົວໜ່ວຍທີ່ກຳລັງດຳເນີນການປະຕິຮູບນີ້ ມີ 5 ຫົວໜ່ວຍເສດຖະກິດທີ່ຖືເປັນຍຸດທະສາດເຄິ່ງຮ້ອນ ເຊັ່ນ: ລັດວິສະຫະກິດໄຟຟ້າລາວ, ບໍລິສັດຜະລິດໄຟຟ້າລາວມະຫາຊົນ, ລັດວິສະຫະກິດການບິນລາວ, ລັດວິສະຫະກິດນ້ຳມັນເຊື້ອໄຟລາວ ລັດວິສະຫະກິດພັດທະນາກະສິກຳ ແລະ ອຸດສkຫະກຳ ແລະ ການບໍລິການຂາອອກ-ຂາເຂົ້າ ແຕ່ປະເດັນທີ່ຂ້າພະເຈົ້າຢາກຍົກຂຶ້ນນີ້ ສັງເກດເຫັນວ່າ ການປະຕິຮູບທີ່ຜ່ານມາ ແມ່ນຍັງມີລັກສະນະຊັກຊ້າຫຼາຍເຊິ່ງມັນອາດຈະມີຫຼາຍເຫດຜົນຫຼາຍປັດໄຈທັງພາຍໃນ ແລະ ພາຍນອກ ສະນັ້ນ, ເພື່ອເຮັດໃຫ້ການປະຕິຮູບດັ່ງກ່າວມີລັກສະນະຕັ້ງໜ້າ ມີປະສິດທິພາບປະສິດທິຜົນ ຮັບປະກັນຄວາມຖືກຕ້ອງໂປ່ງໃສ ຮັບປະກັນໃຫ້ເກີດຜົນປະໂຫຍດສູງສຸດຕໍ່ປະເທດຊາດ ໂດຍສະເພາະແມ່ນເພື່ອບໍ່ໃຫ້ມີໜີ້ສິນແກ່ຍາວຄຸມເຄືອໄປອີກ ແລະ ເພື່ອບໍ່ໃຫ້ລັດຖະບານມີພາລະແບກຫາບຕໍ່ໄປ ຂ້າພະເຈົ້າ ຈຶ່ງຂໍສະເໜີວ່າ:

1: ຢາກໃຫ້ທາງລັດຖະບານຊີ້ແຈງເບິ່ງເຫດຜົນວ່າເປັນຫຍັງຈຶ່ງມີການຊັກຊ້າ ແລະ ສະເໜີໃຫ້ມີການເລັ່ງລັດການປະຕິຮູບໃຫ້ໄວເທົ່າທີ່ຈະໄວໄດ້ ໂດຍສະເພາະແມ່ນ 5 ລັດວິສະຫະກິດຍຸດທະສາດເຄິ່ງ



ຮ້ອນ ຄວນຈະໃຫ້ແລ້ວປີ 2025 ນີ້ ຖ້າເປັນໄປໄດ້;

2: ສະເໜີໃຫ້ລັດຖະບານກຳນົດໃຫ້ລະອຽດເລີຍວ່າ ໃນ 5 ຫົວໜ່ວຍລັດວິສາຫະກິດຍຸດທະສາດເຄິ່ງຮ້ອນ ປັດຈຸບັນນີ້ ເພິ່ນຈະໄປປະຕິຮູບໃນທິດທາງໃດ, ຈະປະຕິຮູບສະເພາະການບໍລິຫານຄຸ້ມຄອງ ຫຼື ການບໍລິການເທົ່ານັ້ນບໍ ຫຼື ຈະມີການປະຕິຮູບທາງດ້ານໂຄງສ້າງການຖືຮຸ້ນ ຫຼືເປີເຊັນການຖືຮຸ້ນ ຖ້າຈະມີການປະຕິຮູບທາງດ້ານໂຄງສ້າງການຖືຮຸ້ນ ກໍລະບຸເລີຍວ່າລັດຖະບານເຮົາຈະຖືຮຸ້ນຈັກເປີເຊັນ ສ່ວນທີ່ເຫຼືອແມ່ນຈັກເປີເຊັນ.

3: ສະເໜີໃຫ້ລັດຖະບານກຳນົດໄລຍະເວລາທີ່ຈະເຮັດສຳເລັດ ຖ້າເປັນໄປໄດ້ ຢາກໃຫ້ສຳເລັດໃນປີ 2025 ຍິ່ງເປັນການດີ ເພາະວ່າຖ້າການປະຕິຮູບ 5 ຫົວໜ່ວຍລັດວິສາຫະກິດຍຸດທະສາດນີ້ສຳເລັດໄວ ຢ່າງມີປະສິດທິພາບປະສິດຜົນ ຂ້າພະເຈົ້າ ຄິດວ່າຈະເປັນການປະກອບສ່ວນຊຸກຍູ້ເຮັດໃຫ້ແຜນພັດທະນາເສດຖະກິດຂອງພວກເຮົາເປັນໄປໄດ້ດີ.

ຂ້າພະເຈົ້າ ຢາກສະເໜີເລື່ອງການປະລະໜ້າທີ່ການຮ່ຳຮຽນຂອງປະຊາກອນໜຸ່ມ ເຊິ່ງຂ້າພະເຈົ້າຈະບໍ່ເວົ້າຄືນອີກ ແຕ່ຈະຂໍສະເໜີເປັນຂໍ້ສະເໜີແນະໃນການແກ້ໄຂບັນຫາ ເພາະຜ່ານມານັ້ນ ສສຊ ເຂດ 1 ນະຄອນຫຼວງວຽງຈັນ ກໍໄດ້ຊີ້ໃຫ້ເຫັນແລ້ວວ່າ ປັດຈຸບັນນີ້ ນັກຮຽນ ນັກສຶກສາ ທີ່ເປັນໄວໜຸ່ມແມ່ນປະລະໜ້າທີ່ໃນເວລາທີ່ເຂົາເຈົ້າກຳລັງຮຽນຢູ່ຊັ້ນມັດທະຍົມຕົ້ນ, ມັດທະຍົມປາຍ ຢູ່ໃນລະບົບສາມັນ ແລະ ຫຼັງຈາກຮຽນຈົບແລ້ວ ແມ່ນບໍ່ສືບຕໍ່ຮຽນວິຊາສະເພາະ ແລະ ຢູ່ໃນມະຫາວິທະຍາໄລວິທະຍາສາດສຸຂະພາບ ກໍມີທ່າອ່ຽງທີ່ວ່ານັກສຶກສາມາເສັງເຂົ້າຫຼຸດລົງຕົວຢ່າງ ໃນສົກປີ 2020-2021 ມີນັກສຶກສາມາເສັງເຂົ້າປະມານ 5.000 ຄົນ ແຕ່ປີນີ້ ສົກສຶກສາ 2023-2024 ຫຼຸດລົງເຫຼືອພຽງ 2.077 ຄົນ ກາຍເຄິ່ງໜຶ່ງ ແຕ່ກໍຍັງໂຊກດີຢູ່ວ່າ ເຮົາຮັບເອົາປະມານ 1 ໃນ 4 ກໍປະມານ 500 ຄົນໃນທົ່ວມະຫາໄລ ກໍຖືວ່າຍັງມີທາງເລືອກຢູ່ ອັນນີ້ເປັນຂະແໜງການທີ່ວ່ານັກສຶກສາໄວໜຸ່ມເຮົາໃຫ້ຄວາມສົນໃຈໄດ້ຮັບຄວາມນິຍົມຊົມຊອບມາແຕ່ໃດ ແຕ່ມາຮອດປັດຈຸບັນກໍຖືວ່າຫຼຸດລົງຫຼາຍ ເຊິ່ງມັນຊີ້ໃຫ້ເຫັນວ່າ ການປະລະໜ້າທີ່ຂອງໄວໜຸ່ມ ເປັນບັນຫາທີ່ເຮົາຕ້ອງໄດ້ເອົາໃຈໃສ່ໃຫ້ດີທີ່ສຸດ ແມ່ນຢູ່ວ່າຂະເຈົ້າໄປອອກແຮງງານ ໄປເຮັດວຽກ ແຕ່ວ່າບາງຄົນກໍຕ້ອງການຮ່ຳຮຽນຢູ່ ສະນັ້ນ, ຂ້າພະເຈົ້າ ຈຶ່ງຢາກສະເໜີວ່າ ຄວນຈະເພີ່ມທະວີຍົກລະດັບການສຶກສານອກໂຮງຮຽນ ຫຼື ວ່ານອກລະບົບໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ຝຶກອົບຮົມວິຊາຊີບໃຫ້ຫຼາຍຂຶ້ນກວ່າເກົ່າ ຖ້າເປັນໄປໄດ້ ຢາກສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ພັດທະນາຫຼັກສູດການຮຽນການສອນແບບອອນລາຍ ທັນເປັນທັນສະໄໝ ແລະ ໃນການພັດທະນາຫຼັກສູດ ເຮົາບໍ່ຈຳເປັນຕ້ອງເອົາທຸກຢ່າງທີ່ວ່າໃນຫຼັກສູດແບບມາດຖານ ເລືອກເອົາບາງຈຸດມາ ແລະ ໃຫ້ເສີມທັກສະຊີວິດ ແລະ ກໍທັກສະອື່ນໆ ທີ່ເອີ້ນວ່າເປັນຊອຟສະກິວໃຫ້ເຂົາເຈົ້າ ເພາະວ່າເຂົາເຈົ້າກຳລັງເຮັດວຽກຢູ່ ຖ້າໄດ້ທັກສະພວກນີ້ຕື່ມ ຈະເປັນການເສີມສ້າງການເຮັດວຽກຂອງເຂົາເຈົ້າ ແລະ ໃຫ້ເຂົາລົງທະບຽນທາງອອນລາຍ ຮຽນຈົບແລ້ວ ກໍສາມາດມີໃບປະກາດສະນີຍະບັດ ຫຼື ວ່າໃບຢັ້ງຢືນຄັກແນ່ ອັນນີ້ຂ້າພະເຈົ້າຄິດວ່າຈະເປັນການແກ້ໄຂເລື່ອງຊັບພະຍາກອນຂອງພວກເຮົາໃນອະນາຄົດ.

ບັນຫາສຸດທ້າຍ ແມ່ນການຊຸກຍູ້ຜະລິດສິນຄ້າພາຍໃນຂອງພວກເຮົາ ອັນນີ້ ຂ້າພະເຈົ້າກໍໄດ້ຍິນຫຼາຍທ່ານສະເໜີແຕ່ກໍຍັງບໍ່ທັນເຫັນວ່າພວກເຮົາຈະລິເລີ່ມຄືແນວໃດ ຂ້າພະເຈົ້າຢາກສະເໜີບາງຄຳເຫັນຄືແນວນີ້ ອັນທີໜຶ່ງ ຕ້ອງມີການຮ່ວມມືລະຫວ່າງຂະແໜງການຈາກຫຼາຍຝ່າຍເຂົ້າມາແກ້ໄຂບັນຫາ ອັນທີສອງ ເລີ່ມຕົ້ນດ້ວຍການສຶກສາເບິ່ງວ່າເຮົາຈະຜະລິດຜະລິດຕະພັນຫຍັງອອກມາ ໂດຍສະເພາະແມ່ນຢາກໃຫ້ເນັ້ນໃສ່ສິນຄ້າທີ່ໃຊ້ປະຈຳວັນ ແລະ ບໍ່ຈຳເປັນຕ້ອງເອົາວັດຖຸດິບຈາກຕ່າງປະເດທເຂົ້າມາຜະລິດ, ອັນທີສາມ ແມ່ນຊອກຫາກຸ່ມຜູ້ຜະລິດ ວ່າໃຜສົນໃຈ ອັນທີສີ່ ກໍຄືຊອກແຫຼ່ງທຶນໃຫ້ເຂົາເຈົ້າ ບໍ່ໝາຍຄວາມວ່າ ຊອກແລ້ວກໍແລ້ວໄປ ພາກສ່ວນວິຊາການທີ່ກ່ຽວຂ້ອງຕ້ອງໄດ້ໃຫ້ການສະໜັບສະໜູນ ແລະ ອັນສຸດທ້າຍ ແມ່ນຕ້ອງຫາຕະຫຼາດຈຳໜ່າຍໃຫ້ເຂົາເຈົ້າອີກ ໃຫ້ມັນເປັນຕ່ອງໂສ້ໃຫ້ເປັນຫຼາຍຂະແໜງມາຮ່ວມກັນ ຖ້າເຮັດໄດ້ແນວນີ້ ຂ້າພະເຈົ້າຄິດວ່າ ການຍູ້ແຮງພາຍໃນພວກເຮົາຈະເປັນໄປໄດ້ດີ.

ລັດວິສະຫະກິດ ຍຸດທະສາດເຄິ່ງຮ້ອນທັນຄວນຈະໃຫ້ແລ້ວປີ 2025 ນີ້ ຖ້າເປັນໄປໄດ້;

**ຮຽບຮຽງໂດຍ: ກົງໃຈ ແສງອຳພັນ**

# ສ້າງຄວາມເຂັ້ມແຂງກ່ຽວກັບການສ້າງເອກະສານ ໃຫ້ແກ່ພະນັກງານ

(ສພຊ) ສະພາປະຊາຊົນແຂວງບໍ່ແກ້ວ ໄດ້ຈັດຊຸດຝຶກອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບວຽກງານການສ້າງເອກະສານທາງການ ໃຫ້ແກ່ພະນັກງານສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກສະມາຊິກສະພາປະຊາຊົນແຂວງປະຈຳຢູ່ເຂດເລືອກຕັ້ງບັນດາເມືອງ ໃນວັນທີ 6 ທັນວາ 2023 ທີ່ສະໂມສອນຂອງເມືອງປາກທາ ແຂວງບໍ່ແກ້ວ ໂດຍການເປັນປະທານຂອງທ່ານ ພັອ. ທຸມແພງ ອິນທະຈັກ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ, ຮອງປະທານສະພາປະຊາຊົນແຂວງ ໂດຍມີຄູຝຶກທີ່ມາຈາກສະພາປະຊາຊົນແຂວງ ແລະ ພະແນກພາຍໃນແຂວງບໍ່ແກ້ວ ເພື່ອຍົກສູງຄວາມຮັບຮູ້ ແລະ ພາລະບົດບາດການເປັນເສນາທິການ ໃຫ້ແກ່ສະພາປະຊາຊົນແຂວງ ແລະ




ຮັບປະກັນໃຫ້ແກ່ການສ້າງເອກະສານທາງການ, ຮັບປະກັນຄວາມຄວາມຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ, ລວມທັງການສ້າງຄວາມເຂັ້ມແຂງສະເພາະວຽກງານຂອງສະພາປະຊາຊົນແຂວງ, ຮັບປະກັນການຕອບສະໜອງໃຫ້ແກ່ການປ່ຽນແປງທາງດ້ານບຸກຄະລາກອນ ເປັນຕົ້ນແມ່ນການສັບຊ້ອນພະນັກງານໄປຮັບວຽກໃໝ່ ໂດຍສະເພາະແມ່ນພະນັກງານຊ່ວຍວຽກ ທີ່ປະຈຳຢູ່ເຂດເລືອກຕັ້ງບັນດາເມືອງ.

ທ່ານ ພັອ. ທຸມແພງ ອິນທະຈັກ ມີຄຳເຫັນກ່າວເປີດຊຸດຝຶກອົບວ່າ: ການຈັດຝຶກອົບຮົມຄັ້ງນີ້ແມ່ນມີຄວາມໝາຍຄວາມສຳຄັນ ເພື່ອສ້າງຄວາມເຂັ້ມແຂງໃນການຮ່າງນິຕິກຳ, ຄົ້ນຄວ້າ, ວິເຄາະ, ວິໄຈຂໍ້ມູນຕ່າງໆ ເພື່ອເປັນຂໍ້ມູນໃຫ້ຄະນະນຳ ກໍຄືສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ກອງປະຊຸມຝຶກອົບຮົມຄັ້ງນີ້ ພວກເຮົາຈະໄດ້ຮັບຟັງການບັນລະຍາຍ ແລະ ສົນທະນາແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆທີ່ຄະນະຮັບຜິດຊອບໄດ້ກະກຽມ ເຊັ່ນ: ກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ; ດຳລັດ ວ່າດ້ວຍຕາປະທັບ;ຄວາມຮູ້ພື້ນຖານກ່ຽວກັບການກຳນົດຕຳແໜ່ງງານ; ກົດໝາຍວ່າດ້ວຍເອກະສານທາງການ; ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍເອກະສານທາງການ; ວຽກງານບໍລິຫານເອກະສານ, ການສຳເນົາເອກະສານ, ການຄຸ້ມຄອງເອກະສານ.

ໂອກາດນີ້, ຍັງຮຽກຮ້ອງມາຍັງສຳມະນະກອນທຸກທ່ານເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ກຳແໜ້ນເນື້ອໃນຢ່າງເລິກເຊິ່ງ, ເອົາໃຈໃສ່ຮັບຟັງ ແລະ ສົນທະນາແລກປ່ຽນ ໄປພ້ອມໆກັນໃຫ້ມີຄວາມເຂົ້າໃຈຢ່າງລະອຽດ, ພ້ອມທັງປະຕິບັດລະບຽບຂອງການຝຶກອົບຮົມ ແລະ ເຂົ້າຮ່ວມການຝຶກອົບຮົມໃຫ້ສຳເລັດຕາມລະດັບຄາດໝາຍ ໂດຍຊຸດຝຶກອົບຮົມຄັ້ງນີ້ ແມ່ນໃຊ້ເວລາ 3 ວັນເຕັມຈຶ່ງສຳເລັດ.

ກອງປະຊຸມຝຶກອົບຮົມຄັ້ງນີ້ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ບຸນເພັງ ທຸມມະວົງ)**




# ກົດໝາຍ ວ່າດ້ວຍພິພິທະພັນ

ຕໍ່ຈາກສະບັບກ່ອນ

8. ວັດຖຸພັນທີ່ມີຄຸນຄ່າສູງ ໝາຍເຖິງວັດຖຸພັນທີ່ມີເອກະລັກສະເພາະອັນໂດດເດັ່ນ, ພິເສດ, ຫາຍາກ, ເປັນວັດຖຸຄູ່ບ້ານຄູ່ເມືອງ ແລະ ເປັນທີ່ສັກກາລະບູຊາຂອງປະຊາຊົນລາວບັນດາເຜົ່າ ຊຶ່ງບໍ່ສາມາດປະເມີນຄຸນຄ່າ ແລະ ລາຄາໄດ້;

9. ຫໍພິພິທະພັນ ໝາຍເຖິງ ສະຖານທີ່ ສະສົມ ທ້ອນໂຮມ, ອະນຸລັກ, ປົກປັກຮັກສາ ແລະ ວາງສະແດງ ວັດຖຸພັນ ເພື່ອຮັບໃຊ້ໃຫ້ແກ່ການ ສຶກສາ, ຄົ້ນຄວ້າ, ອົບຮົມ, ທັດສະນະສຶກສາ ຂອງສັງຄົມ ແລະ ຮັບໃຊ້ໃຫ້ແກ່ການທ່ອງທ່ຽວ;

10. ສະຖາບັນ ໝາຍເຖິງ ບ່ອນສຶກສາ, ຄົ້ນຄວ້າ, ຮຽນຮູ້ກ່ຽວກັບວຽກງານພິພິທະພັນດ້ວຍການທັດສະນະ, ທ່ຽວຊົມແລະຈິນຕະນາການດ້ວຍຕົນເອງ ໂດຍທີ່ບໍ່ໄດ້ຜ່ານການຮຽນ-ການສອນຂອງຄູອາຈານ;

11. ວິລະຊົນ ໝາຍເຖິງຜູ້ກ້າຫານ, ນັກຮົບຜູ້ເສຍສະລະຊີວິດເພື່ອນຳເອົາເອກະລາດແລະເສລີພາບມາໃຫ້ປະເທດຊາດ;

12. ກຸ່ມຄົນ ໝາຍເຖິງ ການຮ່ວມຕົວຂອງຄົນແຕ່ສອງຄົນຂຶ້ນໄປ ເພື່ອເຄື່ອນໄຫວກິດຈະກຳໃດໜຶ່ງ;

13. ຊຸມຊົນ ໝາຍເຖິງ ປະຊາກອນ ທີ່ດຳລົງຊີວິດຢູ່ໃນພື້ນທີ່ໃດໜຶ່ງທີ່ແນ່ນອນມີຈຸດພິເສດຄ້າຍຄືກັນ, ຜູກພັນ, ເພິ່ງພາອາໄສ ຊຶ່ງກັນ ແລະ ກັນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານພິພິທະພັນ**

ລັດ ຊຸກຍູ້ ແລະ ສົ່ງເສີມວຽກງານພິພິທະພັນໃຫ້ມີການຂະຫຍາຍຕົວຢ່າງກວ້າງຂວາງ, ເຂັ້ມແຂງ, ມີຄຸນນະພາບ ດ້ວຍການສ້າງ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖູປະກອນ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນການພັດທະນາວຽກງານພິພິທະພັນ, ສະໜອງຂໍ້ມູນ ຂ່າວສານ, ການສຶກສາ, ຄົ້ນຄວ້າ ໃຫ້ແກ່ສັງຄົມ ລວມທັງສົ່ງເສີມການທ່ອງທ່ຽວ.

ລັດ ຮັບຮູ້ ແລະ ປົກປ້ອງສິດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃນການເຄື່ອນໄຫວວຽກງານພິພິທະພັນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ຫຼັກການເຄື່ອນໄຫວວຽກງານພິພິທະພັນ**

ການເຄື່ອນໄຫວວຽກງານພິພິທະພັນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງ ຄົມ ແຫ່ງຊາດ;
2. ຮັບປະກັນລັກສະນະຊາດ, ລັກສະນະເຄົ້າເດີມທາງດ້ານປະຫວັດສາດ, ວັດທະນະທຳ, ວິທະຍາສາດ ແລະ ທັນສະໄໝ;
3. ຮັບປະກັນການສະໜອງຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ເປັນປະໂຫຍດໃຫ້ແກ່ສັງຄົມ ໃນການສຶກສາ, ຄົ້ນຄວ້າ, ວິໄຈ ແລະ ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ;
4. ຮັກສາຄວາມລັບ ແລະ ຄວາມປອດໄພ ຂອງວັດຖຸພັນ;
5. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງການມີສ່ວນຮ່ວມຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານພິພິທະພັນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພິພິທະພັນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມກ້າວໜ້າ, ທັນສະໄໝ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດພິພິທະພັນ

ມາດຕາ 8 ປະເພດພິພິທະພັນ

ພິພິທະພັນ ມີ ສາມປະເພດ ດັ່ງນີ້:

1. ພິພິທະພັນລັດ;
2. ພິພິທະພັນລວມໝູ່;
3. ພິພິທະພັນເອກະຊົນ.

### ໝວດທີ 1
### ພິພິທະພັນລັດ

**ມາດຕາ 9 ພິພິທະພັນລັດ**

ພິພິທະພັນລັດ ແມ່ນພິພິທະພັນທີ່ສ້າງຕັ້ງຂຶ້ນ ແລະ ຄຸ້ມຄອງໂດຍລັດ ຊຶ່ງປະກອບດ້ວຍ ຫໍພິພິທະພັນແຫ່ງຊາດ, ຫໍພິພິທະພັນທ່ານຜູ້ນຳ, ຫໍພິພິທະພັນຂະແໜງການ, ຫໍພິພິທະພັນທ້ອງຖິ່ນ, ຫໍພິພິທະພັນລັດວິສາຫະກິດ, ອະນຸສອນສະຖານ, ຫໍວາງສະແດງ ແລະ ຫ້ອງວາງສະແດງ.

**ມາດຕາ 10 ຫໍພິພິທະພັນແຫ່ງຊາດ**

ຫໍພິພິທະພັນແຫ່ງຊາດ ແມ່ນສະຖານທີ່ສະສົມທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງວັດຖຸພັນທີ່ມີຄຸນຄ່າສູງ, ເປັນສັນຍາລັກ, ເປັນຫຼັກຖານທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ທີ່ໂດດເດັ່ນຂອງຊາດ.

**ມາດຕາ 11 ຫໍພິພິທະພັນທ່ານຜູ້ນຳ**

ຫໍພິພິທະພັນທ່ານຜູ້ນຳ ແມ່ນສະຖານທີ່ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງກ່ຽວກັບປະຫວັດຊີວິດ, ການເຄື່ອນໄຫວ ແລະ ວັດຖຸສິ່ງຂອງຕ່າງໆຂອງທ່ານຜູ້ນຳ ເປັນຕົ້ນຫໍພິພິທະພັນທ່ານໄກສອນ ພົມວິຫານ.

**ມາດຕາ 12 ຫໍພິພິທະພັນຂະແໜງການ**

ຫໍພິພິທະພັນຂະແໜງການ ແມ່ນ ສະຖານທີ່ ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງ ວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນຂອງຂະແໜງການ ເປັນຕົ້ນ ຫໍພິພິທະພັນປະຫວັດສາດກອງທັບ, ຫໍພິພິທະພັນປ້ອງກັນຄວາມສະຫງົບ, ຫໍພິພິທະພັນວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 13 ຫໍພິພິທະພັນທ້ອງຖິ່ນ**

ຫໍພິພິທະພັນທ້ອງຖິ່ນ ແມ່ນຫໍພິພິທະພັນທີ່ສ້າງຕັ້ງຂຶ້ນ ແລະ ຄຸ້ມຄອງ ໂດຍອົງການປົກຄອງທ້ອງຖິ່ນ ເພື່ອເປັນສະຖານທີ່ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງ ສະແດງວັດຖຸພັນທີ່ມີຄຸນຄ່າສູງ ແລະ ໂດດເດັ່ນ ໃນລະດັບທ້ອງຖິ່ນ ເປັນຕົ້ນ ຫໍພິພິທະພັນແຂວງ, ຫໍພິພິທະພັນເມືອງ.

ອ່ານຕໍ່ສະບັບໜ້າ



# ມາດຕະການປົກປ້ອງຂໍ້ມູນລັບ-ຂໍ້ມູນສ່ວນບຸກຄົນ

❖ ວິເສດ ສະແຫວງສຶກສາ

ໃນຍຸກສື່ສັງຄົມໄຮ້ຊາຍແດນ ທີ່ຂັບເຄື່ອນດ້ວຍເຕັກໂນໂລຊີ ລ້ຳຍຸກດ້ານຂໍ້ມູນຂ່າວສານນີ້, ຊາວໂລກໄດ້ຮັບທັງຜົນປະໂຫຍດ ແລະ ໄດ້ຮັບທັງສິ່ງທ້າທາຍທີ່ເປັນອັນຕະລາຍ. ສິ່ງທ້າທາຍທີ່ຂໍເວົ້າໃນບົດນີ້ ກໍຄືການໂຈລະກຳຂໍ້ມູນສ່ວນບຸກຄົນ ແລະ ບັນດາຂໍ້ມູນລັບລະຫວ່າງກັນແລະກັນ. ດັ່ງນັ້ນ ແຕ່ລະປະເທດຈຳເປັນຕ້ອງມີລະບົບປ້ອງກັນຢ່າງແໜ້ນໜາ ເພື່ອບໍ່ໃຫ້ຂໍ້ມູນຕົກເຮ່ຍເສຍຫາຍ. ໃນປັດຈຸບັນການລັກລອບຂໍ້ມູນຂ່າວສານໄດ້ກາຍເປັນໜຶ່ງໃນບັນດາອາຊະຍາກຳ ໂດຍສະເພາະແມ່ນການລັກລອບຂໍ້ມູນຄວາມລັບທີ່ພົວພັນກັບຄວາມໝັ້ນຄົງ-ຄວາມປອດໄພ ຂອງຊາດ, ຂໍ້ມູນຄວາມລັບດ້ານເຕັກໂນໂລຊີ ທີ່ເປັນຊັບສິນທາງປັນຍາສະເພາະຂອງປະເທດ ຫຼື ໜ່ວຍງານໃດໜຶ່ງ ແລະ ທີ່ລະບາດແຮງໃນປັດຈຸບັນແມ່ນການລັກລອບຂໍ້ມູນດ້ານການຄ້າເອເລັກໂຕຼນິກ ຫຼື ທີ່ເອີ້ນກັນວ່າ ອີ-ຄອມເມີດ (e-commerce ). ສຳລັບ ສປ ຈີນນັ້ນ, ການປ້ອງກັນບໍ່ໃຫ້ຂໍ້ມູນທີ່ເປັນຄວາມລັບຖືກເສຍຫາຍນັ້ນໄດ້ມີພື້ນຖານທາງກົດໝາຍຮອງຮັບຢ່າງຄັກແນ່ ໂດຍທາງການຂອງປະເທດນີ້ ໄດ້ສ້າງຕັ້ງລະບົບສານປົກປ້ອງ ແລະ ໄກ່ເກ່ຍບັນຫາຄວາມຂັດແຍ່ງດ້ານການຄ້າເອເລັກໂຕຣນິກ ຢູ່ໃນຫຼາຍໆຕົວເມືອງໃຫ່ຍ ທີ່ເປັນສູນການຄ້າ ແລະ ອຸດສະຫະກຳ. ບັນຫາຄວາມຂັດແຍ່ງທີເກີດຈາກການລັກລອບຂໍ້ມູນລັບໃນບັນດາຕົວເມືອງໃຫ່ຍໆນັ້ນ ສ່ວນຫຼາຍແມ່ນພົວພັນ ກັບ ລິຂະສິດ ແລະ ຊັບສິນທາງປັນຍາ. ຢູ່ປະເທດ **ອິນໂດເນເຊຍ** ໃນໄລຍະດຽວກັບ ສປ ຈີນ(2018) ທາງສຳນັກງານ ສະຖິຕິແຫ່ງຊາດ ກໍ່ໄດ້ເລີ່ມເກັບກຳຂໍ້ມູນ ກ່ຽວກັບການຄ້າເອເລັກໂຕຣນິກ ນັບແຕ່ເດືອນມັງກອນ ປີ 2018 ເພາະຖືວ່າເປັນຂໍ້ມູນທີ່ມີລັກສະນະອ່ອນໄຫວ ແລະ ສ່ຽງຖືກໂຈລະກຳ. ຂໍ້ມູນການຄ້າເອເລັກໂຕຣນິກ ທີ່ທາງສຳນັກງານສະຖິຕິແຫ່ງຊາດ ອິນໂດເນເຊຍ ເລັ່ງປ້ອງກັນຢ່າງເຂັ້ມງວດ ລວມມີຂໍ້ມູນສຳຄັນພື້ນຖານ, ຂໍ້ມູນກ່ຽວກັບການຊື້-ຂາຍ, ລະບົບຊຳລະເງິນ, ລາຍການສິນຄ້າ, ຂໍ້ມູນກ່ຽວກັບລູກຄ້າ (ຜູ້ຊື້) ແລະ ຜູ້ຂາຍ. ທ່ານຜູ້ອຳນວຍການສຳນັກງານສະຖິຕິແຫ່ງຊາດໃນເວລານັ້ນ ໄດ້ເປີດເຜີຍກ່ຽວກັບແຜນຄຸ້ມຄອງຂໍ້ມູນການຄ້າເອເລັກໂຕຣນິກວ່າ: ແມ່ນເພື່ອປົກປ້ອງ ແລະ ພັດທະນາເສດຖະກິດດິຈິຕອນໃຫ້ໄດ້ມາດຕະຖານສາກົນ, ເພື່ອຮັບໃຊ້ ນະໂຍບາຍຄວບຄຸມຂໍ້ມູນຂອງຂະແໜງການການຄ້າເອເລັກໂຕຼນິກ ກໍຄືການເງິນ ເອເລັກໂຕຼນິກ (ເງິນບິດຄອຍ) ເຊິ່ງທາງການອິນໂດເນເຊຍ ຫ້າມນຳໃຊ້. ຢູ່ **ສສ ຫວຽດນາມ**, ຂໍ້ລິເລີ່ມກ່ຽວກັບການປົກປ້ອງຂໍ້ມູນສ່ວນບຸກຄົນ ໄດ້ມີຂຶ້ນໃນກອງປະຊຸມສະພາແຫ່ງຊາດ ໃນທ້າຍເດືອນຕຸລາ 2015 ໂດຍໄດ້ມີການພິຈາລະນາຄວາມຈຳເປັນໃນການສ້າງກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນ.

ຂ່າວບອກວ່າ, ບັນດາ ສສຊ ຕ່າງກໍໃຫ້ຄວາມສຳຄັນກ່ຽວກັບການສ້າງກົດໝາຍສະເພາະຂຶ້ນເພື່ອຄຸ້ມຄອງຂໍ້ມູນສ່ວນບຸກຄົນ ບໍ່ໃຫ້ຮົ່ວໄຫຼຊະຊາຍ. ຍ້ອນວ່າຂໍ້ມູນສ່ວນບຸກຄົນ ໃນຫວຽດນາມ ໃນເວລານັ້ນ ຈຳນວນບໍ່ໜ້ອຍຖືກລັກ ໂດຍຜ່ານລະບົບສື່ສັງຄົມອອນລາຍ. ຂີ້ຮ້າຍໄປກວ່ານັ້ນ, ກໍມີປະກົດການຈ່າວຂາຍຂໍ້ມູນສ່ວນບຸກຄົນໃນລາຄາຖືກໆ ປະມານ 10 ໂດລາອີກດ້ວຍ. ບັນດາ ສສຊ ໃນກອງປະຊຸມ ເຫັນວ່າປາກົດການດັ່ງກ່າວ ເປັນການລະເມີດສິດທິສ່ວນບຸກຄົນຢ່າງຈະແຈ້ງ, ເຮັດໃຫ້ຄົນໃນສັງຄົມຕົກເປັນເຫຍື່ອການລົບກວນຈາກບັນດານາຍໜ້າທີ່ຈ່າວຂາຍສິນຄ້າ, ການບໍລິການ, ສ່ວນໃຫ່ຍແມ່ນການໂຄສະນາ ກ່ຽວກັບອະສັງຫາລິມະຊັບ, ການໂຄສະນາກ່ຽວກັບ ການບໍລິການດ້ານປະກັນໄພ ແລະ ອື່ນໆ. ການລັກລອບຂໍ້ມູນສ່ວນບຸກຄົນນັ້ນດຳເນີນໄປແບບເລິກແລບແນບນຽນ ເຊິ່ງເປັນການຍາກທີ່ຜູ້ຖືກລະເມີດສິດ ຈະສາມາດຊອກຫາຜູ້ກະທຳຜິດໄດ້. ຢູ່ປະເທດ**ລາວ**ພວກເຮົາກໍເຄີຍໄດ້ຍິນຫຼາຍຄົນຈົ່ມທຸກ ຍ້ອນຖືກລົບກວນຈາກສຽງໂທລະສັບລຶກລັບ ທີ່ຫຼອນມາຈ່າວຂາຍສິນຄ້າ ແລະ ການບໍລິການທີ່ບໍ່ໄດ້ຂໍຮ້ອງ. ບັນຫານີ້ບໍ່ຮູ້ວ່າ ພວກເຮົາມີແຜນແກ້ໄຂຢ່າງຈິງຈັງແນວໃດແລ້ວ?.




# ຖ້າເສີມທ່າອ່ອນແອ ກໍພ່າຍຕໍ່ບໍລິໂພກນິຍົມ...

# ຕົ້ນກົບເມກ



ການທີ່ຄົນເຮົາຕື່ນ ຫຼື ຫຼົງຕື່ນກະແສໂລກ ແລະ ຄ່ານິຍົມໃໝ່ບາງປະການ ບາງຄັ້ງກໍເຮັດໃຫ້ຜູ້ທີ່ຫຼົງຕື່ນກະແສເຫຼົ່ານັ້ນເລືອກເດີນທາງປະພຶດຜິດຕໍ່ຮີດຄອງປະເພນີ ແລະ ສິນທຳດັ່ງເດີມທີ່ເຄີຍຮັກສາສືບທອດປະຕິບັດມາຍາວນານ ແລະ ປັດຈຸບັນນີ້ ຫຼາຍຄົນກໍຮູ້ແກ່ໃຈແລ້ວວ່າ ຄ່ານິຍົມ ຫຼື ກະແສໂລກບາງປະການມັນບໍ່ແມ່ນເສັ້ນທາງດີງາມຕໍ່ຊີວິດຄອບຄົວ ຫຼື ຄວາມສາມັກຄີໃນຄອບຄົວສະເໝີໄປ.

ຜູ້ຂຽນຕັ້ງໃຈຂຽນບົດນີ້ ບໍ່ມີເຈຕະນາຕໍ່ຕ້ານ ບໍລິໂພກນິຍົມ, ວັດຖຸນິຍົມ ຫຼື ທຶນນິຍົມ ແຕ່ພຽງຢາກຕັ້ງຂໍ້ສັງເກດໃຫ້ທ່ານຜູ້ອ່ານໄດ້ພິຈາລະນາທົບທວນຄືນນຳກັນ ເພາະບາງບັນຫາກ່ອນຈະເກີດຂຶ້ນ ປາກົດແຈ້ງແກ່ສັງຄົມ ມັນອາດຈະອອກມາໃນສູດສີໝົ່ນ ທັງໆທີ່ສີຂາວຈະແຈ້ງ ແລະ ສີດຳຈະແຈ້ງ ແຕ່ພໍມັນຈະເກີດບັນຫາແບບແນບນຽນ... ໃນແບບທີ່ມີສາກບັງໜ້າ ກໍຕ້ອງສ້າງພຶດຕິກຳສີໝົ່ນ (ສີຂີ້ເຖົ່າ) ເພື່ອອຳພາງເຈືອຈານ ບໍ່ໃຫ້ມະນຸດດ້ວຍກັນຕື່ນຜິດສັງເກດ ແຕ່ສ້າງປັດໃຈເອື້ອອຳນວຍຕໍ່ການບ່ຽງເບນສ້າງພຶດຕິກຳຄຸມເຄືອ ເພື່ອຫຼົບຫຼີກສິນທຳ ແລ້ວລະເມີດກົດປະເພນີ ລະເມີດຈັນຍາບັນ, ລະເມີດຮີດຄອງ... ຈຶ່ງເກີດບັນຫາເຊື່ອງຊ້ອນຕາມມາ.

ຜູ້ຂຽນຍົກຕົວຢ່າງ ການລະເມີດສິນທຳ ແລະ ກົດໝາຍຄອບຄົວ ເພາະກະແສບໍລິໂພກນິຍົມ-ວັດຖຸນິຍົມ...ວັດຖຸບາງປະການ ມັນກະຕຸ້ນຈິດໃຈມະນຸດ ໃຫ້ເອື້ອອຳນວຍຕໍ່ການລະເມີດກົດໝາຍຄອບຄົວ ລະຫວ່າງຜົວນອກໃຈເມຍ ຫຼື ເມຍນອກໃຈຜົວ ເພາະປັດໄຈ ແລະ ເງື່ອນໄຂບາງປະການປ່ຽນແປງຫຼາຍໄວວາ, ບາງຫ້ອງການ-ບໍລິສັດ ມີການໃຊ້ລະບົບລັອກ ກັນຄົນນອກມາຫຍຸ້ງ ແລະ ບາງຫ້ອງການໃຊ້ລະບົບແບບຕາເວັນຕົກ ກັນຄົນນອກໄວ້ຢ່າງຕາຍໂຕ ບາງຄັ້ງ ລູກຜົວຈະເຂົ້າພົບຕ້ອງຜ່ານຂັ້ນຕອນຫຼາຍຊັ້ນ...

ຜູ້ຂຽນເຫັນວ່າ: ບາງບັນຫາກ່ຽວຂ້ອງກັບການລະເມີດສິນທຳ-ຮີດຄອງປະເພນີ ມັນເກີດມາຫຼາຍຈາກກະແສນອກຕໍ່ມາດ້ວຍການສ້າງປັດໄຈອຳນວຍເຊື່ອງຊ້ອນແອ້ມແປະແອບອ້າງໜ້າທີ່ວຽກງານ ແຕ່ເຊື່ອງຊ້ອນດ້ວຍຕັນຫາເຫັນແກ່ໂຕ ມັນກໍພາໃຫ້ສັງຄົມເພພັງເທື່ອລະໜ້ອຍໄດ້!

**ສະເໜີແລກປ່ຽນ**

# ປະທານ ໄກສອນ ພົມວິຫານ ຈະຢືນຍົງຢູ່ໃນໃຈຂອງພວກເຮົາຕະຫຼອດໄປ

#ດອກຫຍ້າ

ວັນທີ 13 ທັນວາ ເປັນວັນຄົບຮອບວັນເກີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ ຂອງປວງຊົນລາວທັງຊາດ ແລະ ໃນປີນີ້ ກໍໄດ້ໝູນວຽນມາບັນຈົບ ຄົບຮອບ 103 ປີ (13/12/1920-13/12/2023) ຕະຫຼອດຊີວິດຂອງເພິ່ນ ແມ່ນໄດ້ອຸທິດໃຫ້ແກ່ປະເທດຊາດ ແລະ ປະຊາຊົນ, ທ່ານເຮັດວຽກຢ່າງບໍ່ຮູ້ອິດເມື່ອຍໃນພາລະກິດກອບກູ້ປົດປ່ອຍປະເທດຊາດ ນຳເອົາຄວາມເປັນເອກະລາດ, ອິດສະຫຼະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນມາໃຫ້ແກ່ປວງຊົນລາວໄດ້ຢ່າງມີໄຊ ແລະ ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ຢ່າງສະຫງ່າຜ່າເຜີຍ ແລະ ສືບຕໍ່ນຳພາປວງຊົນລາວທັງຊາດ ປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດສູ່ຈຸດໝາຍສັງຄົມນິຍົມ ດ້ວຍທ່າກ້າວທີ່ໜັກແໜ້ນ ແລະ ມີຜົນສຳເລັດຢ່າງຕໍ່ເນື່ອງ.

ປະທານ ໄກສອນ ພົມວິຫານ ແມ່ນລູກຮັກຫຼານແພງຂອງປະຊາຊົນລາວບັນດາເຜົ່າ ເປັນບຸກຄົນທີ່ຮັກຊາດເປັນນັກປະຕິວັດຜູ້ຍິ່ງໃຫຍ່ຂອງຊາດ ເປັນວິລະບູລຸດ, ເປັນຜູ້ນຳທີ່ປີຊາສາມາດ, ສະຫຼາດສ່ອງໃສ ແລະ ສະດຸ້ງໄວ; ທ່ານເປັນທັງນັກທິດສະດີ ແລະ ພຶດຕິກຳທີ່ດີ ສາມາດຂົນຂວາຍໂຄສະນາ, ປາຖະກະຖາດີເລີດ ເປັນນັກຍຸດທະສາດ, ອອກແບບນະໂຍບາຍ ແລະ ວິທີປະຕິບັດທີ່ສະຫຼາດຄ່ອງແຄ້ວ; ປະທານ ໄກສອນ ພົມວິຫານ ເປັນສັນຍາລັກ ແລະ ແກ່ນສານຂອງຄວາມສາມັກຄີພາຍໃນພັກ ແລະ ໃນຊາດ ເຊິ່ງຍາມໃດ ທ່ານກໍເອົາໃຈໃສ່ສ້າງ ແລະ ເພີ່ມທະວີຄວາມສາມັກຄີປອງດອງລະຫວ່າງເຜົ່າ, ຄວາມເປັນປຶກແຜ່ນພາຍໃນຊາດ ແລະ ຄວາມເປັນເອກະພາບພາຍໃນພັກ.

ປະທານ ໄກສອນ ພົມວິຫານ ເປັນຜູ້ນຳທີ່ມີຄຸນສົມບັດສິນທຳປະຕິວັດອັນສູງສົ່ງ, ມີທັດສະນະມະຫາຊົນກວ້າງຂວາງ, ເປັນຜູ້ນຳທີ່ດຸໝັ່ນ, ດຳລົງຊີວິດແບບງ່າຍດາຍ, ປະຢັດ ແລະ ບໍລິສຸດປອດໃສຂາວສະອາດ; ເປັນນັກເຄື່ອນໄຫວສາກົນທີ່ດີເດັ່ນ, ເປັນຜູ້ວາງແຜນແນວທາງ ແລະ ເປັນແບບຢ່າງປະຕິບັດແນວທາງການຕ່າງປະເທດຢ່າງຖືກຕ້ອງ ເຮັດໃຫ້ ສປປ ລາວ ມີບົດບາດໃນເວທີສາກົນນັບມື້ສູງເດັ່ນ.

ໃນສະພາບຄວາມຮຽກຮ້ອງຕ້ອງການໃໝ່, ພວກເຮົາຕ້ອງຕັ້ງໜ້າຮ່ຳຮຽນ ແລະ ສືບທອດມໍລະດົກອັນລ້ຳຄ່າຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ສ້າງໄວ້ດ້ວຍການຕັ້ງໜ້າສືບຕໍ່ສ້າງບົດບາດ ກ້າວບຸກທະລຸທາງດ້ານຈິນຕະນາການຢ່າງແຂງແຮງ ດ້ວຍການສັງລວມເອົາທັດສະນະແນວຄິດ, ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງປະທານ ໄກສອນ ພົມວິຫານ ມາເປັນແບບຢ່າງໃນການເຝິກຝົນຫຼໍ່ຫຼອມຕົນເອງໃຫ້ເປັນສະມາຊິກພັກ, ພະນັກງານທີ່ດີເດັ່ນ ເປັນແບບຢ່າງນຳໜ້າໃນພາລະກິດປະຕິວັດໃນໄລຍະໃໝ່ໃຫ້ບັນລຸຜົນ ຕາມລະດັບຄາດໝາຍທີ່ວາງໄວ້; ພ້ອມກັນເດັດດ່ຽວຍຶດໝັ້ນໃນການກ້າວເດີນສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ ປະຕິບັດສອງໜ້າທີ່ຍຸດທະສາດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ຍຶດໝັ້ນການສ້າງພັກ-ພະນັກງານ ເພື່ອເພີ່ມທະວີຄວາມສາມາດກຳອຳນາດ, ລັກສະນະເປັນແບບຢ່າງນຳໜ້າ ແລະ ກຳລັງແຮງສູ້ຣົບຂອງພັກ ໃຫ້ສຳເລັດພາລະກິດປະຫວັດສາດ, ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດຄຸ້ມຄອງສັງຄົມຕາມທິດພັກນຳພາ, ລັດຄຸ້ມຄອງດ້ວຍກົດໝາຍ ແລະ ປະຊາຊົນເປັນເຈົ້າເຂົ້າຮ່ວມເຮັດໃຫ້ສັງຄົມມີຄວາມສະຫງົບ, ສາມັກຄີເປັນແຜ່ນແໜ້ນໜາ ແລະ ມີການພັດທະນາດ້ວຍຄວາມໜັກແໜ້ນຕໍ່ເນື່ອງ; ຕັ້ງໜ້າປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ ເອກະລາດ ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃກ້ຄຽງ ກໍຄືບັນດາປະເທດອາຊຽນ, ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດທົ່ວໂລກ ເຊິ່ງແມ່ນຄວາມຈຳເປັນພາວະວິໄສ ເພື່ອສ້າງເປັນກຳລັງແຮງ ສັງລວມເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ພັກຂອງພວກເຮົາແມ່ນກ້າວໜ້າທີ່ສຸດ, ງົດງາມທີ່ສຸດ, ແຕ່ວ່າທາງພາຍໃນກໍຍັງມີສິ່ງບົກພ່ອງຜິດພາດຢູ່. ພ້ອມກັນນັ້ນ ພວກເຮົາກໍເຫັນວ່າກົກເຄົ້າຂອງຂໍ້ບົກພ່ອງຜິດພາດນັ້ນແມ່ນຫຍັງ ແລະ ແນ່ນອນພວກເຮົາຈະສາມາດຊອກວິທີແກ້ໄຂມັນໄດ້. ພວກເຮົາຕັດສິນໃຈເຮັດວຽກເພີ່ມຕື່ມ ເພື່ອໃຫ້ພັກຂອງພວກເຮົາກ້າວໜ້າຂຶ້ນໄປເລື້ອຍໆ.

ທ່າທີຂອງແຕ່ລະບຸກຄົນ ກ່ຽວກັບຂໍ້ບົກພ່ອງຕ່າງໆຂອງພັກເຮົາກໍຕ່າງກັນ ພວກນັກສວຍໂອກາດຈັບເອົາຂໍ້ບົກພ່ອງຂອງພວກເຮົານັ້ນໄປໃຊ້ເພື່ອໂຄສະນາທັບຖົມພວກເຮົາ, ເຂົາຊ້ຳເວົ້າຍົກຍໍເພີ່ມຂຶ້ນອີກ ເພື່ອມ້າງເພພັກຂອງພວກເຮົາ, ສະມາຊິກຈຳພວກໜຶ່ງ ພັດອາໄສຂໍ້ບົກພ່ອງຂອງພັກເພື່ອຫາຜົນປະໂຫຍດສ່ວນຕົວ, ນັ້ນແມ່ນທ່າທີຂອງສະມາຊິກທີ່ເປັນນັກສວຍໂອກາດ.

ສະມາຊິກຈຳພວກທີສາມນັ້ນ ອັນໃດກໍຕາມຊ່າງ ເຮັດໃຫ້ແລ້ວເລື່ອງກໍແລ້ວກັນ. ບໍ່ຕຳໜິໃຜ, ບໍ່ຕຳໜິຕົນເອງ, ນັ້ນແມ່ນສະມາຊິກ ແລະ ພະນັກງານທີ່ເບື່ອໜ່າຍໜ້າວຽກທີ່ອ່ອນແອ.

ສະມາຊິກຈຳພວກທີ່ສີ່ນັ້ນ ເມື່ອເຫັນຜູ້ໃດມີຂໍ້ບົກພ່ອງ ຜິດພາດນັ້ນ ກໍເບິ່ງຄືເສືອສາງສັດສິ່ງ, ມີແຕ່ທວງໃຫ້ຂັບໄລ່ເຂົາອອກຈາກພັກໂລດ, ຖ້າພັກບໍ່ໄລ່ເຂົາອອກ ກໍຖືວ່າພາຍໃນພັກນີ້ເສຍໄປໝົດ, ບໍ່ມີສິ່ງດີເສຍແລ້ວ, ເມື່ອເປັນດັ່ງນັ້ນ ເຂົາກໍເບື່ອໜ່າຍ ແລະ ໝົດຫວັງໄປ, ບາງທີເຂົາກໍບໍ່ເຮັດວຽກຫຍັງຕໍ່ໄປອີກ, ຈົນວ່າບາງຄົນປະຖິ້ມພັກໄປຍ້ອນ, ນັ້ນແມ່ນທ່າທີຂອງຜູ້ທີ່ມີແນວຄິດກົນຈັກໂພດໄປ, ນັ້ນກໍແມ່ນພະຍາດ “ໃນເຮົາ” ອີກດ້ວຍ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
| --- | --- |
| ຫໍສະໝຸດ | ຫໍສະມຸດ |
| ມຸດນ້ຳ | ໝຸດນ້ຳ |
| ອາສາສະໝັກ | ອາສາສະມັກ |
| ສະມັກນ້ຳ | ສະໝັກນ້ຳ |
| ຫຍັບອອກ | ຍັບອອກ |
| ຜ້າຍັບ | ຜ້າຫຍັບ |
| ມະຫະກຳ | ມະຫາກຳ |
| ມະຫາສານ | ມະຫະສານ |



## ສຸກສະບາຍທາຍໂລດ

# ຜັກ ແລະ ໝາກໄມ້

ໂດຍ: ສາວແອ່ນ



ເພື່ອສຸຂະພາບທີ່ດີຂອງທ່ານຜູ້ອ່ານ ສະນັ້ນ, ສະບັບນີ້ເຮົາມີສັບພະຄຸນຂອງຜັກ ແລະ ໝາກໄມ້ 6 ຊະນິດ ມານຳສະເໜີໃຫ້ເປັນທາງເລືອກໃນການຊ່ວຍເລື່ອງການຂັບຖ່າຍ ເພື່ອໃຫ້ທ່ານຂັບຖ່າຍໄດ້ສະດວກຂຶ້ນ ທັງຍັງເປັນການລ້າງສານພິດໃນຮ່າງກາຍນຳອີກ. ຫາກທ່ານຮູ້ສຶກມີບັນຫາກ່ຽວກັບການຂັບຖ່າຍ, ຖ່າຍບໍ່ສະດວກ ທັງທີ່ກິນແບບປົກກະຕິທຸກມື້ ຂໍໃຫ້ກິນຜັກ ແລະ ໝາກໄມ້ນີ້ໃຫ້ຫຼາຍຂຶ້ນ

**1. ຜັກຫົມ:** ຜັກຫົມເປັນຜັກທີ່ອຸດົມໄປດ້ວຍເສັ້ນໄຍ ເຊິ່ງເປັນສານອາຫານທີ່ດີສຳລັບການລ້າງລຳໄສ້ ແລະ ຊ່ວຍໃຫ້ຂັບຖ່າຍໄດ້ສະດວກ; ນອກນັ້ນ, ຍັງມີສານອາຫານທີ່ສຳຄັນອື່ນໆເຊັ່ນ: ທາດໂປຣຕີນ, ວິຕາມິນ, ກົດອາມິໂນ ແລະ ແຮ່ທາດ; ພ້ອມນັ້ນ, ຍັງຊ່ວຍເລື່ອງການຂັບປັດສະວະ ແລະ ຊ່ວຍຫຼຸດຄໍເລສເຕີຣໍໄດ້ເຊັ່ນດຽວກັນ; ສຳລັບທ່ານທີ່ຢູ່ໃນໄລຍະຂອງການຫຼຸດນໍ້າໜັກ ແນະນຳໃຫ້ກິນຜັກຫົມ ເພາະຈະຊ່ວຍໃຫ້ຮູ້ສຶກອີ່ມໄວ ແລະ ອີ່ມດົນ ນອກນີ້, ຍັງຊ່ວຍຫຼຸດການດູດຊຶມໄຂມັນບໍ່ດີໃນຮ່າງກາຍໄດ້ເປັນຢ່າງດີ.

**2. ເຊເລີລີ:** ຜັກຊະນິດນີ້ ເປັນທີ່ຮູ້ຈັກດີໃນການເປັນຕົວຊ່ວຍເລື່ອງການຂັບຖ່າຍ ເພາະບັນຈຸເກືອ (Sodium Cluster) ຊະນິດໜຶ່ງ ທີ່ຊ່ວຍລ້າງສິ່ງບໍ່ດີ ເປັນຕົ້ນສານພິດ, ສານເຄມີ ຫຼື ເຊື້ອພະຍາດອອກຈາກຕັບໄດ້ຢ່າງມີປະສິດທິພາບ ທັງຍັງຊ່ວຍຊຳລະລ້າງສິ່ງເສດເຫຼືອ ແລະ ຊ່ວຍຂັບປັດສະວະອອກຈາກຮ່າງກາຍໄດ້ເຊັ່ນດຽວກັນ ແລະ ເປັນອີກວິທີທີ່ຈະຊ່ວຍຫຼຸດອາການບວມນໍ້າໄດ້ດີທີ່ສຸດ.

**3. ໝາກແຕງ:** ໝາກແຕງອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫຼະ ແລະ ກົດອະມິໂນຊີລູລາຍ (Citrulline) ທີ່ເຮັດໜ້າທີ່ລ້າງສານພິດອອກຈາກຮ່າງກາຍ ສຳລັບແມ່ຍິງ ທີ່ຕ້ອງການຄວບຄຸມໄຂມັນໃນເລືອດ ຫຼື ຫຼຸດອາການບວມນໍ້າ ສາມາດເຮັດໄດ້ໂດຍການດື່ມນໍ້າໝາກແຕງປະສົມກັບນໍ້າໝາກນາວ ວິທີນີ້ ຈະຊ່ວຍບັນເທົາອາການດັ່ງກ່າວໄດ້ເປັນຢ່າງດີ ແລະ ຍັງລ້າງສານພິດອອກຈາກຮ່າງກາຍ ແລະ ຊ່ວຍໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ດີຍິ່ງຂຶ້ນ.

**4. ໝາກນາວ:** ນໍ້າໝາກນາວປະສົມກັບນໍ້າອຸ່ນ ເປັນເຄື່ອງດື່ມທີ່ຊ່ວຍໃນການຂັບຖ່າຍໄດ້ເປັນຢ່າງດີ ເພາະການດື່ມນໍ້າໝາກນາວປະສົມກັບນໍ້າອຸ່ນໃນຕອນເຊົ້າທຸກມື້ ຈະຊ່ວຍກະຕຸ້ນການເຮັດວຽກຂອງລຳໄສ້ໃຫ້ບີບຕົວເພື່ອຂັບສານພິດອອກມາພ້ອມການຂັບຖ່າຍ ແລະ ຊ່ວຍໃຫ້ຂັບຖ່າຍສະດວກຂຶ້ນ.

**5. ໝາກກີວີ:** ມີເສັ້ນໄຍຫຼາຍ ມັນຈຶ່ງບໍ່ແປກທີ່ຈະຊ່ວຍໃນການຂັບຖ່າຍ ທັງຍັງຊ່ວຍເຮັດໃຫ້ລຳໄສ້ເຮັດວຽກດີຂຶ້ນ ແລະ ສຳຄັນທີ່ສຸດ ມັນຍັງຊ່ວຍລ້າງສານພິດທີ່ຕົກຄ້າງຢູ່ໃນລຳໄສ້ໄດ້ຢ່າງປະສິດທິພາບ.

**6. ໝາກໂປມຂຽວ:** ອຸດົມສົມບູນໃນເສັ້ນໄຍ ທັງຮູບແບບລະລາຍ ແລະ ບໍ່ລະລາຍ ເຊິ່ງຖ້າກິນໝາກໂປມຂຽວເລື້ອຍໆ ຈະມີຜົນດີຕໍ່ກັບລະບົບຂັບຖ່າຍ ແລະ ເປັນໝາກໄມ້ທີ່ມີແຄລໍຣີຕໍ່າ ກິນເທົ່າໃດກໍບໍ່ຕຸ້ຍ.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

## ປະທານ ໄກສອນ ພົມວິຫານ

(ເນື່ອງໃນໂອກາດ 13 ທັນວາ ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ)

**# ໝາກແຄ່ນ ແດນໝາວ**

❈ ແມ່ນວ່າຕຳແໜ່ງຊັ້ນ ບໍລິຫານເກົ້າສູງສຸດ
ແຕ່ປະທານບໍ່ຖືຕົວ ຖ່ອມຕົນຖະໜອມນ້ອມ
ຮັກຫອມການຮຽນຮູ້ ອົດທົນຜ່ານຜ່າ
ຮຽນນຳໝູ່ຄະນະເພື່ອນ ອານຸຊົນໜຸ່ມນ້ອຍ ບໍ່ເຄີຍງໍ້ອ່ຽງອາຍ

❈ ວິທີເຮັດວຽກນັ້ນ ມີຢູ່ສາມປະການ
ໜຶ່ງ: ຄືການນຳພາ ໝູ່ຄະນະຕັດສິນພ້ອມ
ປຶກສາຫາລືແລ້ວ ເຫັນດີເອກະພາບ
ນຳໄປຈັດແຕ່ງຕັ້ງ ປະຕິບັດໃຫ້ອອກຜົນ

❈ ສອງ: ຕິດແທດຊິດໃກ້ ໃນໝູ່ມະຫາຊົນ
ປະຕິບັດອັນລວມ ຮ່ວມປວງປະຊາເຊື້ອ
ຖືປວງຊາຊົນເປັນແກນຕັ້ງ ຮັກສາສິດຜົນປະໂຫຍດ
ອຸດົມການພັກສ້າງ ວາງໄວ້ເພື່ອປະຊາ

❈ ສາມ: ບໍ່ວ່າ ວຽກໃຫຍ່ນ້ອຍ ອີງໃສ່ມະຫາຊົນ
ສັງລວມຫຼາຍຄວາມຄິດ ສົ່ງເສີມປະດິດສ້າງ
ວາງແນວທາງຖືກຕ້ອງ ຕົວຈິງວິທະຍາສາດ
ຍຶດໝັ້ນລັດທິມາກ-ເລນິນເປັນແກ່ນເຄົ້າ ໝູນໃຊ້ຢ່າງຄ່ອງຕົວ

❈ ປະທານ ເຄີຍຕັກເຕືອນກ່າວຢໍ້າ ຄວນຮໍ່າຮຽນບຸກ
ທິດສະດີທັງຕົວຈິງ ຄູ່ຄຽງປະຕິບັດໃຊ້
ເພື່ອເຂົ້າໃຈຈິງແຈ້ງ ວິທີການລະອຽດ
ມີທັດສະນະຖືກຕ້ອງ ປະຕິບັດຄ່ອງແຄ້ວ
ຕາມແນວທາງພັກຊີ້ ໃຫ້ດີໄດ້ເກີດຜົນ ຊອບແລ້ວ.






## ຫັກຫາຍ ສະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສາວຈົ້ມ**

❈ **ຊົມ**ເຊີຍວັນຄ້າຍວັນເກີດ **ປະທານ ໄກສອນ ພົມວິຫານ** ທີ່ໄດ້ໝູນວຽນມາບັນຈົບຄົບຮອບ **103 ປີ (13/12/1920-13/12/2023)** ຄຸນຄວາມດີທ່ານສ້າງ ສານສືບເປັນຕຳນານ ປວງປະຊາຊົນລາວ ທົ່ວທາບີນແຄວ້ນ **ເດີນໄຕ່ຕາມເທັບຮູ້** ບຸນຄຸນຍິ່ງໃຫຍ່ ປະທານ ສອນສ້າງໄວ້ ໂລກາຮູ້ທົ່ວເຖິງ **ຊອບແລ້ວ!**

❈ **ກອງ**ປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ **(CLV) ຄັ້ງທີ 1** ທີ່ສະພາແຫ່ງຊາດລາວ ເປັນເຈົ້າພາບ ໄຂຂຶ້ນໃນວັນທີ **5-6 ທັນວາ 2023** ໄດ້ເສັດສິ້ນລົງຢ່າງເປັນທາງການ ດ້ວຍໝາກຜົນອັນຈົບງາມ ຂອງການນຳ **3 ປະເທດ** ຮ່ອງຮອຍເຫຼືອຝາກໄວ້ ອາໄລຄິດຫອນຫາ **ກິດຈະກຳເດີ່ນສະພາ** ມ່ວນໂຮແຊວຮ້ອງ ເຊຍຊະບອນກິລາເຄື່ອນ **ຊີງຊັນແຂ່ງລົດຖີບ** ມິດຕະພາບຜູກພັນ ສຳພັນກ້ຽວບໍ່ອາດລືມ **ທ່ານເອີຍ!**

## ຊອບຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ບ້ອງເງິນ

ຊາຍຄົນໜຶ່ງ ເຂົ້າໄປຮ້ານອາຫານແລ້ວປະກາດວ່າ

+ມີໃຜເຮັດເງິນເຮ່ຍບໍ່? ເປັນເງິນທີ່ເອົາຢາງບ້ອງຮັດໄວ້.

+ ມີລູກຄ້າຄົນໜຶ່ງຍົກມືຂຶ້ນແລ້ວບອກວ່າ: ເງິນຂ້ອຍ

ຊາຍຄົນນັ້ນຍື່ນຢາງບ້ອງໃຫ້ເຈົ້າຂອງເງິນ ແລະ ເວົ້າວ່າ: ຂ້ອຍເກັບໄດ້ແຕ່ຢາງບ້ອງ ສ່ວນເງິນຂ້ອຍບໍ່ເຫັນ



## ຄະຕິເຕືອນໃຈ

#ດອກຫຍ້າ

ຈົ່ງດຳລົງຊີວິດ ໃຫ້ຄືກັບມື້ອື່ນ ເປັນມື້ສຸດທ້າຍ
ແຕ່ຈົ່ງຮຽນຮູ້ໃຫ້ຫຼາຍ ຄືກັບຕົນເອງຊິບໍ່ຕາຍຈັກເທື່ອ




# ຮຸ້ນ-ຫຸ້ນ

ຮຸ້ນ-ຫຸ້ນ ເປັນຄຳທີ່ມີຄຳໝາຍອັນດຽວກັນ ແລະ ອອກສຽງຄ້າຍຄືກັນ ຕ່າງແຕ່ລະດັບສຽງວັນນະຍຸດ:

ຄຳທີ່ເປັນຄຳເດີມ ແລະ ມີບັນທຶກໄວ້ຢູ່ໃນວັດຈະນານຸກົມລາວ ສະບັບຂອງມະຫາ ສີລາ ວີຣະວົງ ປີ 1960 ກໍແມ່ນ ຮຸ້ນ ເປັນຄຳຮັບມາຈາກເຄົ້າພາສາຈີນ ໝາຍເຖິງສ່ວນທີ່ລົງທຶນທໍ່ກັນໃນການຄ້າຂາຍເປັນຕົ້ນ. ສ່ວນ ຫຸ້ນ ໃນວັດຈະນານຸກົມດັ່ງກ່າວເປັນຄຳລາວເດີມ ໝາຍເຖິງ ຫ້ອນ, ສັ້ນເຂົ້າ.

ຢູ່ວັດຈະນານຸກົມພາສາລາວ ສະບັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ໄດ້ບັນທຶກຄຳນີ້ເປັນ ຫຸ້ນ ແລະ ໃຫ້ນິຍາມວ່າ ເປັນຄຳນາມ ໝາຍເຖິງ ສ່ວນຫຼືພູດທີ່ລົງທຶນ ອາດເທົ່າກັນຫຼືຫຼາຍໜ້ອຍຕ່າງກັນໃນວຽກງານທຸລະກິດ

ຄຳວ່າ ຫຸ້ນ ນີ້ ປັດຈຸບັນ ປາກົດເຫັນໃຊ້ ຮຸ້ນ ຢ່າງເປັນທາງການ ໂດຍສະເພາະຢູ່ໃນກົດໝາຍວ່າດ້ວຍ ຫຼັກຊັບ ສະບັບປັບປຸງ ປີ 2019 ໃນມາດຕາ 3 ການອະທິບາຍສັບ ຂໍ້ 2 ໄດ້ອະທິບາຍຄຳວ່າ ຮຸ້ນ ທີ່ສະກົດເປັນ ຮ ເຮືອນ ໄມ້ໂທ ວ່າ: ຮຸ້ນ ໝາຍເຖິງ ຫຼັກຊັບປະເພດທຶນທີ່ບໍລິສັດມະຫາຊົນນຳໃຊ້ເປັນເຄື່ອງມືລະດົມທຶນ ເຊິ່ງແບ່ງເປັນໜ່ວຍ ແຕ່ລະໜ່ວຍມີມູນຄ່າເທົ່າກັນ, ຜູ້ຖືຮຸ້ນ ມີຖານະເປັນເຈົ້າຂອງບໍລິສັດສ່ວນໃດສ່ວນໜຶ່ງ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ

ສາເຫດທີ່ພາໃຫ້ມີການສະກົດເປັນ ຮຸ້ນ ກໍຍ້ອນເວລາເວົ້າ ມັກອອກສຽງເປັນ ຕົວ ຮ ເຮືອນ ໄມ້ໂທ.

ໃນພາສາໄທ ເວລາເພິ່ນຂຽນ ກໍແມ່ນ ຫຸ້ນ ແຕ່ເວລາອອກສຽງ ເພິ່ນຈະອອກສຽງເປັນ ຮຸ້ນ.

ຢູ່ໃນວັດຈະນານຸກົມລາວ-ອັງກິດ ປີ 1972 ແລະ ວັດຈະນານຸກົມພາສາລາວ ສະບັບຂອງ ປອ. ທອງຄຳ ອ່ອນມະນີສອນ ມີທັງ ຫຸ້ນ ແລະ ຮຸ້ນ ເຊິ່ງໃຫ້ຄວາມໝາຍອັນດຽວກັນ.

# ມາເລເຊຍຜ່ານຮ່າງກົດໝາຍຕ້ານການສູບຢາ ເພື່ອປົກປ້ອງເຍົາວະຊົນ

ສະພາຕໍ່າມາເລເຊຍຜ່ານຮ່າງກົດໝາຍຕ້ານການສູບຢາ ມີຈຸດປະສົງເພື່ອປົກປ້ອງເຍົາວະຊົນຈາກຜະລິດຕະພັນທີ່ມີສານນິໂຄຕິນ ເຊັ່ນອຸປະກອນສູບຢາໄຟຟ້າ.

ສຳນັກຂ່າວຊິນຫວາ ລາຍງານຈາກນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ເມື່ອວັນທີ 1 ທັນວາ 2023 ວ່າ: ຮ່າງກົດໝາຍທີ່ໄດ້ຍື່ນສະເໜີ ໂດຍທ່ານ ດຣ. ນາງ ຊາລິຮາ ມຸດສ໌ຕາຟາ (Saliha Mustafa) ລັດຖະມົນຕີກະຊວງສາທາລະນະສຸກ ມາເລເຊຍ ລວມມີມາດຕາທີ່ຫ້າມຂາຍ ແລະ ຊື້ຜະລິດຕະພັນຢາສູບ, ອຸປະກອນສຳລັບການສູບ ຫຼື ຜະລິດຕະພັນທົດແທນຢາສູບ ແລະ ການສະໜອງການບໍລິການອື່ນໆກ່ຽວຂ້ອງກັບການສູບຢາສຳລັບເຍົາວະຊົນ.

ຮ່າງກົດໝາຍດັ່ງກ່າວຈະຄວບຄຸມຜະລິດຕະພັນຢາສູບສາມປະເພດຄື: 1) ຢາສູບປຸງແຕ່ງ ຫຼືຢາສູບທຸກຮູບແບບທີ່ປະກອບດ້ວຍຜະລິດຕະພັນທີ່ຖືກອອກແບບສຳລັບການບໍລິໂພກຂອງມະນຸດ; 2) ທາດປະສົມຂອງສານທີ່ໃຊ້ໃນການສູບຢາ ເຊັ່ນນິໂຄຕິນ ທີ່ພົບເຫັນຢູ່ໃນຢາສູບໄຟຟ້າ; 3) ຜະລິດຕະພັນທົດແທນຢາສູບທີ່ສາມາດນຳມາສູບໄດ້.

ສ່ວນມາດຕາຫ້າມການໂຄສະນາ, ສົ່ງເສີມ, ສະໜັບສະໜູນຜະລິດຕະພັນຢາສູບ ເຊິ່ງມີຜົນບັງຄັບໃຊ້ພາຍໃຕ້ກົດໝາຍທີ່ມີຢູ່ແລ້ວ ໄດ້ຂະຫຍາຍຄວບຄຸມທົ່ວທຸກຜະລິດຕະພັນທີ່ມີໃນປັດຈຸບັນ ບໍ່ວ່າຈະເປັນຢາສູບໄຟຟ້າ, ຜະລິດຕະພັນຢາສູບ, ສານສຳລັບການສູບຢາ ແລະ ຜະລິດຕະພັນທົດແທນຢາສູບ.

ໃນຂະນະດຽວກັນ, ຮ່າງກົດໝາຍດັ່ງກ່າວຍັງໄດ້ກຳນົດໃຫ້ຜູ້ນຳເຂົ້າ ແລະ ຜູ້ຜະລິດຜະລິດຕະພັນຢາສູບທັງໝົດລົງທະບຽນແຕ່ລະຜະລິດຕະພັນທີ່ຜະລິດສຳລັບຕະຫຼາດມາເລເຊຍ ເຊິ່ງເປັນການດຳເນີນງານທີ່ສຳຄັນ ເນື່ອງຈາກຊ່ວຍໃຫ້ສາມາດບັນທຶກຂໍ້ມູນສະເພາະ ແລະ ລາຍລະອຽດຂອງແຕ່ລະຜະລິດຕະພັນໄດ້ ລວມທັງສະໜັບສະໜູນການບັງຄັບໃຊ້ໃນປະເທດ ເຊັ່ນການລະບຸຜະລິດຕະພັນທີ່ບໍ່ໄດ້ລົງທະບຽນ.

# ພັກລັດຖະບານອິນເດຍ ຊະນະເລືອກຕັ້ງສະພາທ້ອງຖິ່ນ

ພັກລັດຖະບານກຳອຳນາດຂອງນາຍົກລັດຖະມົນຕີ ນະເຣນທຼາ ໂມດີ ຊະນະການເລືອກຕັ້ງສະພາທ້ອງຖິ່ນຢ່າງໜ້ອຍສາມໃນຫ້າລັດ.



ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງນິວເດລີ, ປະເທດອິນເດຍ ເມື່ອວັນທີ 4 ທັນວາ 2023 ວ່າ: ອິນເດຍໄດ້ຈັດການເລືອກຕັ້ງສະພາທ້ອງຖິ່ນຢູ່ 5 ລັດ ໃນເດືອນພະຈິກຜ່ານມາ ຄື: ມັດທະຍປະເທດ (Madhya Pradesh), ຣາຊະສະຖານ (Rajasthan), ເຕລັງການາ (Telangana), ສັດຕິສະຄາຣະ (Chhattisgarh) ແລະ ມິໂຊຣາມ (Mizoram) ປາກົດວ່າ ພັກພາຣາຕິຍະ ຊະນາຕະ ຫຼື ບີເຈພີ (Bharatiya Janata Party-BJP) ຂອງທ່ານນາຍົກລັດຖະມົນຕີ ນະເຣນທຼາ ໂມດີ (Narendra Modi) ໄດ້ຮັບໄຊຊະນະຢ່າງໜ້ອຍໃນ 3 ລັດ ໄດ້ແກ່: ມັດທະຍປະເທດ, ຣາຊະສະຖານ ແລະ ສັດຕິສະຄາຣະ; ພັກຄອງເກຣສ (Congress) ຂອງທ່ານ ຣາຫູນ ຄານທີ (Rahul Gandhi) ຮັກສາໄຊຊະນະໃນລັດເຕລັງການາ; ສ່ວນລັດໂຊຣາມ ຍັງບໍ່ທັນໄດ້ລາຍງານຜົນຢ່າງເປັນທາງການ.

ການເລືອກຕັ້ງທົ່ວໄປຄັ້ງໃໝ່ໃນອິນເດຍຈະເກີດຂຶ້ນໃນປີໜ້າ ແລະ ທ່ານ ໂມດີ ມີເປົ້າໝາຍທີ່ຈະຮັກສາການດຳລົງຕຳແໜ່ງນາຍົກລັດຖະມົນຕີເປັນສະໄໝທີ 3 ຕິດຕໍ່ກັນ ຫຼັງຈາກນຳພາພັກບີເຈພີໄດ້ຮັບໄຊຊະນະໃນການເລືອກຕັ້ງປີ 2014 ແລະ 2019.

## ຂະບວນລົດຖີບ..

(ຕໍ່ຈາກໜ້າ 1)

ສປປ ລາວ ເພື່ອສະເຫຼີມສະຫຼອງກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ ຫຼື CLV ຄັ້ງທີ 1 ພາຍໃຕ້ຫົວຂໍ້: “ເພີ່ມທະວີບົດບາດຂອງລັດຖະສະພາ ໃນການສົ່ງເສີມການຮ່ວມມືຮອບດ້ານລະຫວ່າງກຳປູເຈຍ-ລາວ-ຫວຽດນາມ” ໂດຍເລີ່ມຈາກໜ້າຫໍສະພາແຫ່ງຊາດ ຫາຫ້ອງວ່າການສຳນັກງານປະທານປະເທດ (ຫໍຄຳ) ແລ້ວກັບຄືນຫາໜ້າຫໍສະພາແຫ່ງຊາດ ໂດຍມີທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ, ມີຜູ້ແທນຈາກກຳປູເຈຍ, ລາວ, ຫວຽດນາມ ແລະ ບັນດາເອກອັກຄະລັດຖະທູດ ແລະ ຕາງໜ້າບັນດາອົງການຈັດຕັ້ງສາກົນປະຈຳລາວ ພ້ອມດ້ວຍມວນຊົນພາຍໃນນະຄອນຫຼວງວຽງຈັນເຂົ້າຮ່ວມເປັນຈຳນວນຫຼາຍ.

ໃນພິທີເປີດ, ທ່ານສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ກ່າວເປີດພິທີຢ່າງເປັນທາງການ ບາງຕອນສຳຄັນວ່າ: ຂະບວນການຂີ່ລົດຖີບຄັ້ງນີ້ ເປັນໜຶ່ງກິດຈະກຳ ທີ່ທັງ 3 ປະເທດຮ່ວມກັນຈັດຕັ້ງ ໃນໂອກາດສະເຫຼີມສະຫຼອງຜົນສຳເລັດກອງປະຊຸມສຸດຍອດດັ່ງກ່າວ ເພື່ອເສີມຂະຫຍາຍການພົວພັນຮ່ວມມື ແລະ ຄວາມສາມັກຄີ ລະຫວ່າງສາມປະເທດ ກໍຄື ສາມສະພາແຫ່ງຊາດກຳປູເຈຍ-ລາວ-ຫວຽດນາມ ໃນການຊຸກຍູ້ການພົວພັນເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ ໃນພາກພື້ນ ແລະ ສາກົນ; ນອກນັ້ນ, ຍັງແນໃສ່ຊຸກຍູ້ ແລະ ເສີມສ້າງຄວາມສາມັກຄີຮັກແພງໃຫ້ແກ່ບັນດາສະມາຊິກສະພາ, ພະນັກງານ-ລັດຖະກອນ ແລະ ໄວໜຸ່ມຂອງ 3 ປະເທດ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງປະຫວັດສາດແຫ່ງການພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມທີ່ການນຳທັງສາມປະເທດໄດ້ຮ່ວມກັນສ້າງໄວ້ ເພື່ອໃຫ້ຄົນຮຸ່ນໃໝ່ໄດ້ສືບຕໍ່ຖະໜຸຖະໜອມ ແລະ ເພີ່ມພູນສາຍພົວພັນດັ່ງກ່າວໃຫ້ຍືນຍົງຕະຫຼອດໄປ.

ຫຼັງຈາກນັ້ນ, ກໍໄດ້ເປີດການແຂ່ງຂັນລົດຖີບ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ ໂດຍປະກອບມີ 2 ປະເພດຄື: ປະເພດທີມ ແລະ ປະເພດດ່ຽວ ເຊິ່ງຜົນການແຂ່ງຂັນ ປະເພດດ່ຽວ ທີ 1 ໄດ້ແກ່ປະເທດຫວຽດນາມ ໄດ້ຮັບເງິນສົດ 9 ລ້ານກີບ, ທີ 2 ປະເທດກຳປູເຈຍ ໄດ້ຮັບເງິນສົດ 7 ລ້ານກີບ ແລະ ທີ 3 ໄດ້ແກ່ຫວຽດນາມ ໄດ້ຮັບເງິນສົດ 4 ລ້ານກີບ; ສ່ວນປະເພດທີມທີ 1 ໄດ້ແກ່ທີມປະເທດກຳປູເຈຍ ໄດ້ຮັບຂັນທ່ານປະທານສະພາແຫ່ງຊາດ ສປປ ລາວ, ທີ 2 ໄດ້ແກ່ທີມ ສປປ ລາວ ໄດ້ຮັບຂັນ 1 ໜ່ວຍ ແລະ ທີ 3 ໄດ້ແກ່ທີມປະເທດຫວຽດນາມ ໄດ້ຮັບຂັນ 1 ໜ່ວຍ.

**(ນາງ ສຸພາວັນ ທອມສະນິດ)**



# ປະມວນພາບໄລຍະກອງປະຊຸມສຸດຍອດລັດຖະສະພາ ກໍາປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1





























**ຜູ້ຊີ້ນໍາ :**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງ ບກ; ທ່ານ ວິລະພັດ ພາບມີໄຊ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອໍາພັນ;
ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພິມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ